# 占芭 ຈຳປາ



## ບັນດາຊົນຊາດຊົນເຜົ່າຈີນຖາມັຂຮັບຕ້ອນ ວັນກຳເນີດປະເທດຊາດຄົບຮອບ 57 ປີ

## ສວນສາທາລະນະໄຮເກິງທີ່ສວຍງາມ

ລາຄາ:13000 ກີບ ¥10

ISSN 1673-3266

10/2006

总第14期

# MEKONG HOTEL

## 湄公酒店

服务中国人，万象有湄公；入住湄公，如在家中

# ໂຮງແຮມ ແມ່ຂອງ




湄公酒店，是中老合资并成立于 1994 年。酒店拥有四栋建筑楼，是首都万象市最大的建筑楼群之一。楼内设有：标房、商务公寓和写字间等。配套服务项目：北京饭庄、夜总会、卡拉 OK 包房、商务中心、会议室、洗熨房、停车场等。全部客房配有：空调、中餐、中文电视、电话、冰箱、卫生间等服务设施。

湄公酒店位于万象市中心，距商业区仅 500 米，离机场 2 公里。前临老挝国家重要的交通枢纽 13 号公路，后依东南亚名河—湄公河 300 米，与泰国隔河相望，地理位置优越，交通便利。客房宽敞明亮，舒适安全，设备齐全，并配有中英文服务和 24 小时保安服务，是商务、旅游、会议、办公及中长期居住和设立办事处的最佳场所。



## Mekong Hotel.We’ve got it all!

Mekong Hotel offers excellent facilities in a superb location,with the mighty Mekong river flowing just be-hind and at a reasonable price.

Our facilities includes hotel rooms,furnished apartment,office space,the Beijing Restaurant,Friendship Night Club,Karaoke and a fully equipped business center.Free transfer service from and to airport both ways.

Whether you need somewhere to sleep,work or relax,the Mekong Hotel is a ideal place.







Address:Luangprabang Rd.Tel:(856 – 21)212937-9 Fax: (856 – 21)212822
E – mail:sales@mekong-ht.com,Website:www.mekong-ht.com










ບໍລິການນໍາທ່ຽວພາຍໃນແລະຕ່າງປະເທດ

ບໍລິການຂາຍປີ້ຍົນພາຍໃນແລະຕ່າງປະເທດ

ບໍລິການຂາຍປີ້ລົດໄຟ ລົດບັດໄປປະເທດໄທ,ຫວຽດນາມ

ບໍລິການເຊົ່າລົດເກັ໋ງ ລົດຈິບຖ0. ລົດຕູ້12 ,15ບ່ອນນັ່ງ ລົດບັດ25 ,35 ,45 ບ່ອນນັ່ງ

ບໍລິການແລ່ນວິຊາໄປຕ່າງປະເທດ





ສົນໃຈເຊີນຕິດຕໍ່: ບໍລິສັດທ່ອງທ່ຽວຄໍາຫລ້າຈໍາກັດ

042/3 ຖະໜົນຟ້າງຸ່ມ ບ້ານມີໄຊ ເມືອງຈັນທະບູລີ

ແຂວງນະຄອນຫລວງວຽງຈັນ ສ.ປ.ປ.ລາວ

Tel/Fax: (856-21) 218677, 218107

Mobile: (856-20) 5606000, 5620161, 5519334

E-mail: khamlatours39@yahoo.com

www.khamla.com

| Inbound Tour | Outbound Tour |
|---|---|
| We provide: | We provide: |
| Tour in Vientiane | Tour to China |
| Tour in VangViene | Tour to Malaysia |
| Tour in Luangprabang | Tour to VietNam |
| Tour in Pakze | Tour to Cambodia |
| Tour in Northern Laos | Tour to Thailand |
| Tour in Southern Laos | Tour to asia |

# ສາລະບານ

10/2006 总第14期



## [特 别 报 道] ຂ່າວພິເສດ

04 ບັນດາຊົນຊາດຊົນເຜົ່າຈີນຄຳນັບຮັບຕ້ອນວັນກຳເນີດປະເທດຊາດຄົບຮອບ 57 ປີ

## [中 国 之 窗] ປ່ອງຢ້ຽມເມືອງຈີນ



08 ສປຈີນຈັດເວທີປາຖະກະຖາສາກົນກ່ຽວກັບການທ່ອງທ່ຽວຊົນນະບົດເປັນຄັ້ງແຮກ
10 ຕັ້ງໜ້າສ້າງສັນເວທີຮ່ວມຊົມໃຊ້ຊັບພະຍາກອນວິທະຍາສາດເຕັກນິກທາງສິ່ງແວດລ້ອມ
12 ສ້າງສັນໂຄງລ່າງໄຮ້ອຸປະສັກເພື່ອຍົກຄຸນະພາບຊີວິດການເປັນຢູ່ໃຫ້ສູງ
14 56 ຊົນເຜົ່າສະແດງ ສັນລະເສີນຊາດຈີນສະໜົມກົມກຽວ
17 ເວັບໄຊໂປເຄີໜີແຜນດາໄດ້ຕັ້ງຂຶ້ນຢູ່ສປຈີນ




ລະດູໃບໄມ້ຫຼົ່ນໃນທາລີມູ ຖ່າຍພາບ: ໂຫຼຈັງເຈີ

塔里木之秋 摄影：罗章泽

主 办：云南省对外文化交流协会
编 辑 出 版：《占芭》杂志社
总 顾 问：丹 增 晏友琼 梁公卿 刘 平 苏正国
总 编 辑：郑 明
副 总 编 辑：戴世平
执行副总编辑：杨 云
编 辑 总 监：董保延
责 任 编 辑：苏雯雯
美 术 总 监：祝 群
总 编 室 主 任：禹正玉
老 文 译 审：黄 冰
翻 译：黄 冰 白厚启
老 文 录 入：白厚启

发 行 范 围：国内外公开发行
出 版 日 期：每月五日
邮 发 代 号：64-36
国际标准刊号：ISSN 1673-3266
国内统一刊号：CN53-1200 / D
地 址：云南省昆明市西华路延长线
教育花园三楼
电 话：86-871-8042593
传 真：86-871-8042591
邮 编：650228

ຈັດທຳໂດຍ: ສະມາຄົມແລກປ່ຽນວັດທະນະທຳກັບຕ່າງປະເທດ
ແຂວງຢູນນານແຫ່ງ ສ ປ ຈີນ
ຮຽບຮຽງພິມຈຳໜ່າຍ: ສຳນັກພິມວາລະສານ《ຈຳປາ》
ປະທານທີ່ປຶກສາ: ຕານເຈັ້ນ ຢຽນຢຽວສົ່ງ ແລງກົງຊິງ ຫຼິວພິງ ຊູເຈີນກົ່ວ
ຫົວໜ້າບັນນາທິການ: ເຈີນໝິງ
ຮອງຫົວໜ້າບັນນາທິການ: ຕ້າຍສືພິງ
ຮອງຫົວໜ້າບັນນາທິການ
ບໍລິຫານ: ຢາງຢູນ
ຜູ້ຄຸມງານ ບັນນາທິການ: ຕົງປາວຢຽນ
ບັນນາທິການປະຈຳ: ຊູເວີນເວີນ
ຜູ້ຄຸມງານຝ່າຍສິລະປະ: ຈູ້ສິນ
ຫົວໜ້າພິມຈຳໜ່າຍ ຢູຍເຈິງຢູຍ
ບັນນາທິການ ພາສາລາວ: ຮວງປິນ
ຜູ້ແປພາສາ: ຮວງປິນ ປາຍໂຫສີ
ຜູ້ພິມພາສາລາວ: ປາຍໂຫສີ

ພິມຈຳໜ່າຍເປີດເຜີຍ: ພາຍໃນແລະຕ່າງປະເທດ
ອອກຈຳໜ່າຍ: ວັນທີ 5 ທຸກເດືອນ
ລະຫັດວາລະສານມາດຖານສາກົນ: ISSN 1673-3266
ລະຫັດວາລະສານປະເທດຈີນ: CN53-1200/D
http://la.yunnan.cn
E-mail: ynzhanba@163.com
ສະຖານທີ່: ສວນດອກໄມ້ສຶກສາສາຍທາງຕໍ່ຖະໜົນຊີຮວາ ນ.ຄ.ຄຸນໝິງ ຂວ.ຢູນນານ
ລະຫັດໄປສະນີ: 650228 ໂທ: 86-871-8042593 ແຟັກ: 86-871-8042591

### 【环 球 扫 描】ສະແກນຮອບໂລກ



18 ຕາມ່າງທາງຫຼວງອາຊີກຳລັງຂະຫຍາຍອອກ
--ທາງຫຼວງສາກົນຄຸນໝິງ--ບາງກອກກາຍເປັນຊ່ອງທາງສີຂຽວ

20 ກອງປະຊຸມໃຫຍ່ສະຫະພັນດາລາສາດສາກົນຢືນຢັນລະບົບສຸລິຍະຈັກກະວານມີດາວເຄາະພຽງ 8 ດວງ

21 ຊາວໜຸ່ມເຢົາວະຊົນ 5 ທະວີບສັນລະເສີນສັນຕິພາບໃນເພີງໄຫຼ່

### 【中 老 交 往】ການໄປມາຫາສູ່ກັນລະຫວ່າງຈີນ-ລາວ



24 ສະຖານີໂທລະພາບແຫ່ງຊາດລາວກັບສື່ມວນຊົນໂທລະພາບຈີນຕັ້ງໜ້າດຳເນີນການຮ່ວມມືຫຼາຍດ້ານ

26 ຄູອາຈານວິທະຍາໄລຫຼອມໂລຫະຄຸນໝິງໄປຝຶກຝົນພາກປະຕິບັດຢູ່ສປປລາວ

### 【老 挝 印 象】ພາບປະທັບໃນເມືອງລາວ

28 ພະຍາຍາມເຊື່ອມໂຍງກັບໂລກ

### 【文 化 博 览】ລຽບຊົມວັດທະນະທຳ

30 ຂົວສະພານແຫ່ງວັດທະນະທຳທີ່ປະສານເຂົ້າກັນ

32 ສິລະປະ "ຂອບຂ້າງ" ທີ່ມີສະເໜຫາຢ່າງປ່ຽມລົ້ນ

### 【旅 游 纵 横】ການທ່ອງທ່ຽວທັດສະນາຈອນ



36 ພູເຂົາໂລຈີແດນສະຫວັນເມືອງຄົນ

40 ສວນສາທາລະນະໄຂເກີງທີ່ສວຍງາມ

### 【今 日 云 南】ຢູນນານໃນວັນນີ້

46 4 ມາດຕາການຊ່ວຍຊູຍູ້ໝູນການສ້າງຊ່ອງທາງແມ່ນ້ຳລ້ານຊ້າງ--ແມ່ນ້ຳຂອງ

48 ຕະຫຼາດພາຍໃນແລະນອກປະເທດນິຍົມຊົມຊອບພືດຜັກຢູນນານ

### 【东 盟 快 讯】ຈັບກະແສຂ່າວອາຊຽນ



50 ອາຊຽນຕັ້ງໜ້າຊຸກຍູ້ບາດກ້າວເສດຖະກິດເປັນເອກະພາບດຽວ

52 ຈັດງານສະເໜີໂຄງການລົງທຶນພາກທຳລະກິດຂອງນັກທຸລະກິດຊາວຈີນອາຊຽນຊຸດທີ 4
ແລະເວທີປາໄສນັກທຸລະກິດຊາວຈີນອາຊີ--ປາຊີຟິກຊຸດປະຖົມມະເລີກ

54 ລັດຖະກອນເສດຖະກິດຊັ້ນສູງອາຊຽນປຶກສາຫາລືບັນຫາສ້າງສັນເຂດການຄ້າເສລີ

56 ເທສະການສົ່ງປາງວັນຂຶ້ນ 9 ຄ່ຳເດືອນາ

### 【民 族 风 情】ຮີດຄອງພື້ນແຜ່ນຂອງຊົນເຜົ່າ



58 ການປັກແສ່ວຂອງເຜົ່າຢ້າວ

60 ແຄນ--ເພື່ອນສະໜິດຂອງໄທເຜົ່າມົ້ງ

### 【学 汉 语】ຮຽນພາສາຈີນ

62 ພວກເຮົາພາກັນສະຫຼອງວັນເກີດເນາະ

### 【为 您 服 务】ບໍລິການທ່ານ

64 ສົ່ງເຊົ້າຫຼືຕົງທົ້ງເຊົ້າ(Cordyceps sinensis)ສະໝຸນໄພມີຄ່າ

## 各民族迎来新中国成立 57 周年

秋高气爽的 10 月，中国各地鲜花盛开，红灯高悬，彩旗飘飘，中国人民迎来了中华人民共和国成立 57 周年华诞。在举国欢庆的日子里，中国 56 个民族儿女共同欢度这一盛大的节日。




ພາບພົມດອກໄມ້ທີ່ສະຫຼອງວັນຊາດສປຈີນຄົບຮອບ 57 ປີຢູ່ສະໜາມຫຼວງທຽນອານເໝີນປັກກິ່ງ　北京天安门广场，为庆祝中华人民共和国成立 57 周年国庆的花坛全景

# ບັນດາຊົນຊາດຊົນເຜົ່າຈີນຄຳນັບຮັບຕ້ອນ



ເດືອນຕຸລາຕັ້ງຕົ້ນອາກາດປອດໂປ່ງສົດໃສ, ດວງດອກມາລານາ ໆຊະນິດພອມເບັ່ງບານທົ່ວແດນດິນຈີນ, ທຸງສີປິ້ວສະບັດກວັດແກວ່ງຕາມສາຍລົມສະຫຼັບໄປດ້ວຍພາບປະດັບໂຄມໄຟສີແດງຫ້ອຍໂຕ່ງເຕ່ງຕາມອາຄານບ້ານຢູ່, ປະຊາຊົນຈີນຄຳນັບຮັບຕ້ອນວັນກຳເນີດສາທາລະນະລັດປະຊາຊົນຈີນວຽນມາບັນຈົບຄົບຮອບ 57 ປີພໍດີ, ໃນບັນຍາກາດວັນສະເຫຼີມສະຫຼອງທົ່ວປະເທດນີ້, ບັນດາ 56 ຊົນຊາດຊົນເຜົ່າຈີນພ້ອມກັນສະຫຼອງວັນມະໂຫລານຄຶກຄື້ນດັ່ງກ່າວ.

ກ່ອນນີ້ 57 ປີ, ວັນປະກາດສ້າງຕັ້ງສາທາລະນະລັດປະຊາຊົນຈີນ, ໄດ້ໄຂສັງກາດໃໝ່ແຫ່ງປະຫວັດສາດຈີນ. ໃນ 57 ປີຜ່ານມາໂດຍສະເພາະແມ່ນ 20 ກວ່າປີພາຍຫຼັງການປະຕິຮູບເປີດກວ້າງສູ່ພາຍນອກ, ປະຊາຊົນຈີນສາມັກຄີບາກບັ່ນສູ້ຊົນ, ລິເລີ່ມເສີມສ້າງທຸລະກິດຢ່າງທໍລະຫົດອົດທົນ, ສ້າງສາປະເທດຈີນທີ່ຮັ່ງມີເຂັ້ມແຂງແລະວັດທະນາຖາວອນ. ກຳລັງການຜະລິດໃນສັງຄົມຂະຫຍາຍຕົວວ່ອງໄວ, ກຳລັງສັງລວມຂອງຊາດໄດ້ທະວີຂຶ້ນໜັກແໜ້ນຢ່າງເດັ່ນຊັດ, ຊີວິດການເປັນຢູ່ຂອງປະຊາຊົນໄດ້ມີການປັບປຸງໃຫ້ດີຂຶ້ນເປັນແຕ່ລະກ້າວ, ຖານະໃນສາກົນນັບມື້ນັບທະວີສູງຂຶ້ນ. ຕໍ່ໜ້າປິຕຸພູມທີ່ຈະເລີນຮຸ່ງເຮືອງແລະອະນາຄົດອັນຜາສຸກສົດໃສ, ປວງຊົນທົ່ວຊາດຈີນໃຜ ໆກໍ່ປ່ຽມລົ້ນໄປດ້ວຍອາລົມຟົດຟື້ນຕື້ນຕັນໃຈຢ່າງເລິກເຊິ່ງແລະເປັ່ງສຽງໄຊໂຍອວຍພອນໄຊແດ່ປະເທດຊາດທີ່ແສນຮັກ!

ໃນປັດຈຸບັນ, ປະຊາຊົນບັນດາຊົນເຜົ່າຈີນສາມັກຄີບາກບັ່ນສູ້ຊົນ, ມຸ່ງໜ້າກ້າວເດີນ, ທຸກວຽກງານໄດ້ຮັບຜົນສຳເລັດຢ່າງເດັ່ນຊັດ: ເສດຖະກິດແຫ່ງຊາດສືບຕໍ່ຮັກສາທ່ວງທ່າຂະຫຍາຍຕົວອັນດີ, ພາລະກິດສັງຄົມເປັນຕົ້ນຄື: ການສຶກສາ, ວິທະຍາສາດ

# ວັນກຳເນີດປະເທດຊາດຄົບຮອບ 57 ປີ



ໃນລະຫວ່າງວັນຊາດຊຸມຊົນທ່ຽວຊົມຕາມສະໜາມຫຼວງທຽນອານເໝີນຄັບຄາໜາແໜ້ນ
十一国庆节期间，北京天安门广场游人如织

ເຕັກໂນໂລຢີ,ວັດທະນະທຳ,ສາທາລະນະສຸກແລະການກິລາໄດ້ສືບກ້າວໄປຢ່າງບໍ່ຢຸດຢັ້ງອັນໄດ້ສ້າງເງື່ອນໄຂອັນມີຜົນດີແກ່ການພັດທະນາເສດຖະກິດ--ສັງຄົມຂອງຈີນຕື່ມອີກ.

ປະຊາຊົນຈີນມີຄວາມໝັ້ນໃຈກ້າວດຸ່ງໄປສູ່ເປົ້າໝາຍສ້າງສັນສັງຄົມພໍຢູ່ພໍກິນຢ່າງຮອບດ້ານ.ສປຈີນຈະລົງເລິກປະຕິຮູບຕື່ມອີກ,ເປີດກວ້າງຕໍ່ພາຍນອກ,ສຸມກຳລັງເຮັດໃຫ້ລວມຍອດເສດຖະກິດ,ກຳລັງສັງລວມຂອງຊາດແລະຊີວິດການເປັນຢູ່ຂອງປະຊາຊົນຍົກສູງຂຶ້ນສູ່ລະດັບຂັ້ນໃໝ່;ຍຶດໝັ້ນຊຸກຍູ້ຄົນພັດທະນາຮອບດ້ານບົນພື້ນຖານເສດຖະກິດ--ສັງຄົມ,ຍຶດໝັ້ນສົ່ງເສີມຄວາມສະໝົມກົມກຽວລະຫວ່າງຄົນກັບທຳມະຊາດ;ປະກອບສ່ວນອັນໃຫຍ່ຫຼວງກວ່າເກົ່າເພື່ອປົກປັກຮັກສາສັນຕິພາບຂອງໂລກແລະຊຸກຍູ້ການພັດທະນາຮ່ວມກັນ;ປະຊາຊົນ 1.3ຕື້ຄົນຮ່ວມຈິດຮ່ວມໃຈກັນ,ສະແຫວງຫາສັດຈະເຮັດແທ້ທຳຈິງ,ພ້ອມພໍ່າກັນພະຍາຍາມອອກເຫື່ອເທແຮງດ້ວຍອາລົມເຜັດມັນເພື່ອຄວາມຮັ່ງມີເຂັ້ມແຂງຂອງປະເທດຊາດ,ຄວາມສະໝົມກົມ



ກຽວຂອງສັງຄົມແລະຄວາມຜາສຸກຂອງປະຊາຊົນ.

ໃນລະຫວ່າງວັນຊາດ, ແຫ່ງຕ່າງ ໆທົ່ວປະເທດຈີນໄດ້ທະຍອຍກັນຈັດການເຄື່ອນໄຫວອຸດົມສົມບູນຫຼາຍຫຼາກ, ຢູ່ນະຄອນຫຼວງປັກກິ່ງ, ພົມດອກໄມ້ທີ່ສວຍສົດຢູ່ສະໜາມຫຼວງທຽນອານເໝິນໄດ້ດູດດຶງເອົາຜູ້ຄົນຢ່າງຫຼວງຫຼາຍຕ້ອງຢຸດບາດກ້າວຊົມເບິ່ງ; ໂຄມໄຟປະດັບຫຼາກຫຼາຍໃນລາຕີການທີ່ຊຽງໄຮ, ກາຍເປັນເສັ້ນພາບວິວທີ່ສວຍງາມກາງຕົວເມືອງ; ການສະແດງສິລະປະວັນນະຄະດີແລະການວາງສະແດງຮູບແບບຕ່າງ ໆ... ໄດ້ສ້າງໃຫ້ບັນຍາກາດມື້ພັກວັນບຸນຍິ່ງເຂັ້ມຂຸ້ນກວ່າເກົ່າ, ທຸກ ໆແຫ່ງກໍ່ອາບເອົ້ໄປດ້ວຍຄວາມຊື່ນຊົມຫົວແຍ້ມມ່ວນຊື່ນເບີກບານ. ການເຄື່ອນໄຫວປະເພດຕ່າງ ໆໄດ້ເຮັດໃຫ້ຊີວິດມວນຊົນແສນອຸດົມຊົມຊື່ນ, ຫຼາຍຄົນໄດ້ສວຍໃຊ້ມື້ພັກວັນຊາດອອກໄປທ່ອງທ່ຽວ, ຢື້ຢາມຍາດຕິພີ່ນ້ອງເພື່ອນຝູງ, ຍູທ່າງຊົມວິວພູຜາລໍາທານອັນສວຍສົດງົດງາມແຫ່ງປິຕຸພູມ. ປວງຊົນທັງຊາດຈີນພ້ອມກັນສະເຫຼີມສະຫຼອງວັນກໍາເນີດປະເທດຊາດຄົບຮອບ 57 ປີ, ພ້ອມກັນອວຍພອນປະເທດຊາດ: ສຸກສັນວັນເກີດ!



ຊຸມຊົນນັບເປັນພັນ ໆພ້ອມກັນຮ້ອງເພງ 《ປິຕຸພູມຂອງຮຽນ》 ເພື່ອສະຫຼອງວັນຊາດຄົບຮອບ 57 ປີ
千人齐声高唱《我的祖国》庆祝新中国成立 57 周年


"ຖະໜົນທຸງຊາດ" ຕາມຖະໜົນນານກິ່ງທີ່ຊຽງໄຮ　上海南京路“国旗街”亮相



ການສະແດງສິລະປະວັນນະຄະດີຂະໜາດໃຫຍ່ "ປະເທດຊາດໝັ້ນຍືນ" ໄດ້ຈັດຂຶ້ນທີ່ສະໜາມຫຼວງຊີຢວນເຊົາຫູອານຮຸຍ　“祖国万岁”大型文艺演出在安徽巢湖西苑广场进行



# ສປຈີນຈັດເວທີປາຖະກະຖາສາກົນກ່ຽວກັບການທ່ອງທ່ຽວຊົນນະບົດເປັນຄັ້ງແຣກ

## 中国首次举办乡村旅游国际论坛

汇聚一批国内外知名专家学者，旨在共同探讨中国乡村旅游发展对社会主义新农村建设的积极作用和影响、借鉴国外乡村旅游发展经验和成果的“2006乡村旅游国际论坛”在贵州省贵阳市举行。

"ປີທ່ອງທ່ຽວຊົນນະບົດຈີນ 2006" ຊຶ່ງຈັດຂຶ້ນຢູ່ແຂວງກຸ່ຍເຈົາ 在贵州省举办的“2006年中国乡村旅游年”

"ເວທີປາຖະກະຖາສາກົນກ່ຽວກັບການທ່ອງທ່ຽວຊົນນະບົດ 2006 "ໄດ້ຈັດຂຶ້ນທີ່ນະຄອນກູ່ຍຢາງແຂວງກູ່ຍເຈົາ, ໂດຍໄດ້ຮຽກໂຮມເອົານັກປາດຜູ້ຊ່ຽວຊານທີ່ມີຊື່ສຽງເຮືອງນາມຈຳນວນໜຶ່ງ, ຈຸດປະສົງເພື່ອພ້ອມກັນຄົ້ນຊອກຫາວຫາການພັດທະນາການທ່ອງທ່ຽວຊົນນະບົດຈີນມີຜົນສະທ້ອນແລະບົດບາດທາງບວກສຳລັບການສ້າງສາຊົນນະບົດແບບໃໝ່ສັງຄົມນິຍົມແລະຖອດຖອນເອົາໝາກຜົນກໍ່ຄືບົດຮຽນພັດທະນາການທ່ອງທ່ຽວຊົນນະບົດຂອງນອກປະເທດ.

ນີ້ເປັນເວທີປາຖະກະຖາສາກົນກ່ຽວກັບການພັດທະນາການທ່ອງທ່ຽວຊົນນະບົດທີ່ມີມາດຖານສູງແລະລະດັບຂັ້ນສູງຊຶ່ງປະເທດຈີນຮ່ວມມືກັບອົງການທ່ອງທ່ຽວ ໂລກແຫ່ງສະຫະປະຊາຊາດແລະທະນາຄານ ໂລກຈັດຂຶ້ນເປັນຄັ້ງແຣກ. ເວທີປາຖະກະຖາເປັນຈຸດສຸມຂອງວຽກງານໜຶ່ງໃນ 5 ລາຍ ສຳລັບ "ປີທ່ອງທ່ຽວຊົນນະບົດຈີນ 2006 " ຂອງກົມທ່ອງທ່ຽວແຫ່ງຊາດຈີນ, ຫົວຂໍ້ຄື "ຮູບແບບອັນໜຶ່ງໃນການສ້າງສາຊົນນະບົດແບບໃໝ່ສັງຄົມນິຍົມ--ການທ່ອງທ່ຽວຊົນນະບົດ ". ຫົວຂໍ້ດັ່ງກ່າວແບ່ງເປັນ 4 ສາຂາປະຊຸມສຳມະນາເຊັ່ນ: "ການທ່ອງທ່ຽວຊົນນະບົດະກຳຈັດຄວາມທຸກຍາກ, ສ້າງ ໂອກາດໃຫ້ມີວຽກເຮັດວຽກທຳ "" ພາລະໜ້າທີ່ສັງຄົມຂອງການທ່ອງທ່ຽວຊົນນະບົດ "" ການທ່ອງທ່ຽວຊົນນະບົດທີ່ຍືນຍົງ " ແລະ " ການຄົ້ນຄວ້າຕົວແບບຂອງຄະດີ--ຕົວສະແດງຂອງພາກຜົນປະ ໂຫຍດບັນດາອົງການ ". ທ່ານສາວສີເວີຍຫົວໜ້າກົມທ່ອງທ່ຽວແຫ່ງຊາດຈີນ, ທ່ານຟຼັງຊິສໂກ ຟຼັງກາລີ ເລຂາທິການໃຫຍ່ອົງການທ່ອງທ່ຽວ ໂລກແລະທ່ານໄຂສາຟ ວັດມາ ຫົວໜ້າກົມພື້ນຖານ ໂຄງລ່າງພາກພື້ນອາຊີຕາວັນອອກແລະປາຊີຟິກຂອງທະນາຄານ ໂລກ ກໍ່ໄດ້ເຂົ້າຮ່ວມເວທີປາຖະກະຖາດັ່ງກ່າວ.

ການທ່ອງທ່ຽວຊົນນະບົດໃນແຂວງກູ່ຍເຈົາເລີ່ມຕົ້ນເຮັດມາແຕ່ໃດ ໆ, ມີປະສົບການອັນແນ່ນອນທາງດ້ານການທ່ອງທ່ຽວອຸປະຖຳຊ່ວຍຊູຜູ້ທຸກຈົນ. ເຄີຍໄດ້ຈັດເວທີປາຖະກະຖາສາກົນກ່ຽວກັບການທ່ອງທ່ຽວຊົນນະບົດສອງຊຸດຕາມລຳດັບ, ທັງໄດ້ຄົ້ນຊອກຫາວຫາຢ່າງມີຜົນດີຕໍ່ການສ້າງສັນລະບົບທີ່ເປັນແບບແຜນ ມາດຖານທາງການທ່ອງທ່ຽວຊົນນະບົດ. ອົງການທ່ອງ



ທ່ຽວຫຼິ້ນຕາມທົ່ງຜັກກາດມັນ 在油菜花地游玩

ທ່ຽວ ໂລກແຫ່ງສະຫະປະຊາຊາດໄດ້ເອົາໃຈໃສ່ໃນລະດັບສູງຕໍ່ຮູບແບບພັດທະນາທີ່ມີຜົນສອງດ້ານ "ຫລຸດຜ່ອນຄວາມທຸກຍາກແລະອະນຸຮັກວັດທະນະທຳ " ຂອງການທ່ອງທ່ຽວຊົນນະບົດກູ່ຍເຈົາ, ໄດ້ຕົກລົງເອົາມັນເປັນຈຸດສັງເກດຍາວນານ. ທະນາຄານໂລກສະໜອງວົງເງິນກູ້ຢືມໃຫ້ພັດທະນາການທ່ອງທ່ຽວຊົນນະບົດຂອງກູ່ຍເຈົາພ້ອມທັງຮຽກຮ້ອງເອົາເປັນ ໂຄງການສາທິດພາຍໃນຂອບເຂດທົ່ວ ໂລກ. ປະຈຸບັນ, ຊົນນະບົດກູ່ຍເຈົາໄດ້ມີໝູ່ບ້ານຊົນເຜົ່ານັບເປັນພັນບ້ານໄດ້ເປີດການທ່ອງທ່ຽວບ້ານຊົນເຜົ່າພຽບພ້ອມໄປດ້ວຍວັດທະນະທຳຊົນເຜົ່າ, ໄດ້ກາຍເປັນຜະລິດຕະພັນທ່ອງທ່ຽວຊົນນະບົດທີ່ມີຫຼາຍຮູບແບບ.

ຜູ້ຊ່ຽວຊານນັກປາດທ່ອງທ່ຽວຊົນນະບົດທີ່ມາຈາກປະເທດແລະເຂດແຄວ້ນອາເມລິກາ, ຝະລັ່ງ, ເຢຍລະມັນ, ນິວຊີແລນ, ອີຕາລີ, ໄທແລະຮົງກົງ, ມາກາວຕະຫຼອດຮອດຜູ້ແທນເຂດປົກຄອງຕົນເອງ, ແຂວງແລະນະຄອນຂອງຈີນກໍ່ໄດ້ເຂົ້າຮ່ວມເວທີປາຖະກະຖາຄັ້ງນີ້.



ຂີ່ເຮືອຊົມໃຊ້ອາຫານຊາວນາ 乘船享受农家菜肴



# ຕັ້ງໜ້າສ້າງສັນເວທີຮ່ວ ກອນວິທະຍາສາດເຕັກ

## 积极构建环境科技资源共享平台

中国正在建设全国环境科技协作和资源信息共享平台，以推动环保领域的持续创新能力。到 2010 年，争取建成 30 个国家环保重点实验室和 50 个国家环保工程技术中心，作为科学研究和技术开发的基础平台。



ປະເທດຈີນກຳລັງສ້າງສັນການປະສານງານວິທະຍາສາດເຕັກນິກທາງສິ່ງແວດລ້ອມແລະເວທີຮ່ວມຊົມໃຊ້ຂໍ້ມູນຂ່າວສານຊັບພະຍາກອນທົ່ວປະເທດເພື່ອຊຸກດັນທັກສະປະດິດຄິດສ້າງອັນໃໝ່ຢ່າງສືບເນື່ອງໃນຂົງເຂດອະນຸຮັກສິ່ງແວດລ້ອມ. ເມື່ອເຖິງປີ2010 ຈະຍາດແຍ່ງໃຫ້ສ້າງໄດ້ຫ້ອງທົດລອງຈຸດສຸມອະນຸຮັກສິ່ງແວດລ້ອມແຫ່ງຊາດ 30 ແຫ່ງແລະສູນເຕັກນິກວິສະວະກຳອະນຸຮັກສິ່ງແວດລ້ອມແຫ່ງຊາດ 50 ແຫ່ງ, ເພື່ອເປັນເວທີພື້ນຖານຂອງການຄົ້ນຄວ້າວິທະຍາສາດແລະພັດທະນາເຕັກໂນໂລຊີ.

ຫ້ອງທົດລອງຈຸດສຸມແລະສູນເຕັກນິກວິສະວະກຳເປັນ "ເຄື່ອງຟັກໄຂ່" ຂອງວິທະຍາສາດເຕັກນິກທາງສິ່ງແວດລ້ອມ. ເພື່ອກໍ່ສ້າງເວທີດັ່ງກ່າວ, ສປຈີນຈະເສີມທ່າແຮງສ້າງສັນເວທີພື້ນຖານຫ້ອງທົດລອງຈຸດສຸມແລະສູນເຕັກນິກວິສະວະກຳ, ວາງແລະຈັດຕັ້ງປະຕິບັດ《ໂຄງການສະເພາະກິດສ້າງສັນທັກສະຫ້ອງທົດລອງຈຸດສຸມແລະສູນເຕັກນິກວິສະວະກຳຂອງກົມໃຫຍ່ອະນຸຮັກສິ່ງແວດລ້ອມແຫ່ງຊາດ》.

ໄປພ້ອມໆກັບການເສີມຂະຫຍາຍທ່າແຮງສະຖາບັນວິທະຍາສາດພາກສ່ວນທີ່ກ່ຽວຂ້ອງແລະເຕັກນິກວິຊາສະເພາະຂອງບຸກຄະລາກອນພອນສະຫວັນພາຍໃນປະເທດຢ່າງເຕັມສ່ວນ, ກົມໃຫຍ່ອະນຸຮັກສິ່ງແວດລ້ອມແຫ່ງຊາດຈີນ, ຕັ້ງໜ້າເຂົ້າຮ່ວມການຄົ້ນຄວ້າບັນຫາສິ່ງແວດລ້ອມທົ່ວໂລກ, ດຶງດູດເອົາຊັບພະຍາກອນວິທະຍາສາດເຕັກນິກທາງສິ່ງແວດລ້ອມທົ່ວໂລກເພື່ອຮັບໃຊ້ພາລະກຳອະນຸຮັກສິ່ງແວດລ້ອມຂອງຈີນ. ພາກອະນຸຮັກສິ່ງແວດລ້ອມແຫ່ງຊາດຈີນຈະເພີ່ມທະວີການຕິດຕໍ່ລຸ່ວງກັບພາກວິທະຍາສາດເຕັກນິກແລະພັດທະນາການປະຕິຮູບ, ຍາດແຍ່ງສ້າງໂຄງການພື້ນຖານວິທະຍາສາດເຕັກນິກຂະໜາດໃຫຍ່ເປັນຕົ້ນຄືຫ້ອງທົດລອງແຫ່ງຊາດ, ສະຖາບັນສັງເກດການສະໜາມແລະຫ້ອງທົດລອງຈຸດສຸມ, ສະໜອງພື້ນຖານວັດຖຸໃຫ້ແກ່ການຄົ້ນຄວ້າວິທະຍາສາດ, ການປະດິດສ້າງເຕັກນິກອັນໃໝ່ແລະການທົດລອງພາກສະໜາມ. ໝູນໃຊ້ຊັບພະຍາກອນວິທະຍາສາດເຕັກນິກທຸກຊະນິດຢ່າງເຕັມທີ່, ໃຫ້ກາຍເປັນສະຖານະພາບອັນດີດ້ານຊັບພະຍາກອນວິທະຍາສາດເຕັກນິກທົ່ວສັງຄົມຮັບໃຊ້ພາລະກຳອະນຸຮັກສິ່ງແວດລ້ອມ.

ການອະນຸຮັກສິ່ງແວດລ້ອມເປັນພາລະກຳທີ່ຂ້າມພະແນກກົມກອງ, ຂ້າມເຂດແຄວ້ນແລະຂ້າມຂະແໜງວິຊາ, ເປັນພາລະກຳລວມຂອງທົ່ວຊາດແລະທົ່ວໂລກ. ກົມໃຫຍ່ອະນຸຮັກສິ່ງແວດລ້ອມແຫ່ງຊາດຈີນຍິນດີຮັບເອົາ "ພອນສະຫວັນໂດດເດັ່ນ" ທຸກໆຝ່າຍຢ່າງກວ້າງຂວາງພ້ອມກັນເຂົ້າຮ່ວມພາລະກຳອະນຸຮັກສິ່ງແວດລ້ອມ, ເອົາວິທະຍາສາດເຕັກນິກເປັນຂົວຕໍ່ແລະສາຍສຳພັນ, ໃຫ້ກາຍເປັນ "ແນວໂຮມເອກະພາບ" ອະນຸຮັກສິ່ງແວດລ້ອມຢ່າງກວ້າງຂວາງ, ນີ້ເປັນຄວາມໝັກແໜ້ນຂອງການສ້າງສັນເວທີຮ່ວມຊົມໃຊ້ຊັບພະຍາກອນວິທະຍາສາດເຕັກນິກທາງສິ່ງແວດລ້ອມ.

# ມຊົມໃຊ້ຊັບພະຍາ
# ນິກທາງສິ່ງແວດລ້ອມ



ຜູ້ໃຫຍ່ພາເດັກນ້ອຍທົດລອງຄັນໄດໄຮ້ອຸປະສັກທີ່ສ້າງຂຶ້ນເພື່ອຄົນພິການ　　一名儿童在家长陪护下体验专为残疾人修建的无障碍楼梯　新华社图

# ສ້າງສັນໂຄງລ່າງໄຮ້ອຸປະສັກເພື່ອຍົກຄຸນະພາບຊີວິດການເປັນຢູ່ໃຫ້ສູງ

## 让无障碍化建设提升生活品质

随着残障人士融入社会需求的愿望不断增长、人口老龄化逐年加剧，以及人们对生活质量要求的不断提高。中国将不断引进国际先进的无障碍设计理念，加强无障碍设施建设，给民众更多的方便。

ໂຄງລ່າງໄຮ້ອຸປະສັກແມ່ນໝາຍເຖິງພື້ນຖານໂຄງລ່າງບໍລິການທີ່ສົມປະກອບການສ້າງສັນຄົບວົງຈອນໃນໂຄງການກໍ່ສ້າງເຄຫະສະຖານສາທາລະນະ, ເຄຫະສະຖານອາຄານບ້ານຢູ່, ເຂດນິຍົມ, ຖະໜົນໃນຕົວເມືອງ, ໂຮງໝໍແລະເຂດທິວທັດທ່ອງທ່ຽວທີ່ສຳຄັນເພື່ອຮັບປະກັນໃຫ້ເດີນຜ່ານປອດໄພແລະນຳໃຊ້ສະດວກ

ສະບາຍສຳລັບຊຸມຊົນຜູ້ອ່ອນແອເພຍແຮງເຊັ່ນ:ຄົນພິການ, ຜູ້ເຖົ້າຜູ້ແກ່, ຄົນເຈັບປ່ວຍແລະເດັກນ້ອຍເປັນຕົ້ນ.

ໃນປະຈຸບັນ, ຊີວິດໃນຕົວເມືອງຂອງຈີນໄດ້ມີການນຳໃຊ້ໂຄງລ່າງໄຮ້ອຸປະສັກບໍ່ໜ້ອຍ, ເປັນຕົ້ນຄື: ຫ້ອງນ້ຳພາຍໃນຕະຫຼາດການຄ້າໃຫຍ່ ໆກໍ່ໄດ້ສະໜອງໂຄງລ່າງທີ່ສະດວກແກ່ຜູ້ມີອຸປະສັກແລະແມ່ລູກອ່ອນ; ຢູ່ສະຖານີລົດໄຟ, ລົດໄຟໃຕ້ດິນແລະຕຶກນັ່ງຄອຍຖ້າເດີ່ນຍົນກໍ່ໄດ້ຕິດຕັ້ງໂຄງລ່າງແລະຊ່ອງທາງສະດວກແກ່ລໍ້ຍູ້; ຢູ່ພາຍໃນຄຸ້ມເຂດຫຼາຍບ່ອນ, ທາງຄ້ອຍທີ່ໄຮ້ອຸປະສັກໄດ້ກາຍເປັນໂຄງລ່າງທີ່ຈຳເປັນ.

ການສ້າງສັນສະພາບແວດລ້ອມແບບໄຮ້ອຸປະສັກໃນຕົວເມືອງເປັນພື້ນຖານແລະເງື່ອນຕົ້ນຕໍສຳລັບກຸ່ມຊົນຜູ້ອ່ອນແອເພຍແຮງຄື:ຄົນພິການ ຜູ້ມີອຸປະສັກ, ຜູ້ເຖົ້າ, ແມ່ຍິງເດັກນ້ອຍແລະຄົນ



ນັກສຶກສາວິທະຍາຄານອຸດສາຫະກຳເຄມີມະຫາວິທະຍາໄລຈີໜານຫັດພື້ນຖານພາສາມືເພື່ອສ້າງສະພາບແວດລ້ອມສັງຄົມໄຮ້ອຸປະສັກແກ່ຄົນຫູໜວກປາກກືກ

济南大学化工学院学生练习基础手语，为聋哑残疾人营造无障碍的社会环境　新华社图



ເຈັບເຂົ້າຮ່ວມຊີວິດສັງຄົມຢ່າງເຕັມສ່ວນ, ເປັນເງື່ອນໄຂສຳຄັນທີ່ອຳນວຍຄວາມສະດວກແກ່ຊີວິດປະຈຳວັນຂອງເຂົາເຈົ້າ, ມັນໄດ້ສ່ອງແສງເຖິງລະດັບຄວາມກ້າວໜ້າສິວິໄລຂອງສັງຄົມໜຶ່ງໜຶ່ງຈາກແງ່ໜຶ່ງ, ທັງເປັນການສະແດງລວມສູນເຖິງຄວາມສິວິໄລທາງດ້ານວັດຖຸແລະຄວາມສິວິໄລທາງດ້ານຈິດໃຈ. ການສ້າງສັນຕົວເມືອງທີ່ມີສະພາບແວດລ້ອມແບບໄຮ້ອຸປະສັກສາມາດອຳນວຍຄວາມສະດວກແກ່ຊີວິດການເປັນຢູ່ຂອງທຸກ ໆຄົນ, ຍົກສູງຄຸນະພາບຊີວິດຂອງທົ່ວທັງຕົວເມືອງ.

ໄປຄຽງຄູ່ກັບຄວາມຕ້ອງການຂອງຄົນພິການຜູ້ມີອຸປະສັກໃນສັງຄົມເພີ່ມຂຶ້ນຢ່າງບໍ່ຢຸດຢັ້ງ, ປະຊາກອນຜູ້ສູງອາຍຸກໍ່ເພີ່ມຫຼາຍຂຶ້ນຊັກໄຊ້, ມາດຖານຄຸນະພາບຊີວິດຂອງຜູ້ຄົນກໍ່ສູງຂຶ້ນຊັກໄຊ້ອັນເປັນການເພີ່ມທະວີຄວາມຮີບຮ້ອນຕື່ມອີກ. ປະເທດຈີນຈະນຳເຂົ້າມະໂນຄະຕິອອກແບບໄຮ້ອຸປະສັກທີ່ກ້າວໜ້າຂອງສາກົນຢ່າງຕໍ່ເນື່ອງ, ນັບທັງຮາດແວແລະຊອບແວສອງດ້ານ, ຍັງຈະສ້າງໂຄງລ່າງຢ່າງທາງຄ້ອຍແລະທາງທຽວຂອງຄົນຕາບອດ, ທັງຜ່ານການຊີ້ແນະຈາກຂໍ້ມູນຂ່າວສານທີ່ເປັນຮູບພາບສີສັນແລະອຸນທະພູມ, ເພີ່ມທະວີການສ້າງສັນໂຄງລ່າງໄຮ້ອຸປະສັກ, ອຳນວຍຄວາມສະດວກໃຫ້ແກ່ມະຫາຊົນຍິ່ງຫຼາຍກວ່າເກົ່າ.




ງານລາຕີພິທີເປີດສາກສະແດງລວມສູນສິລະປະວັນນະຄະດີຊົນເຜົ່າສ່ວນໜ້ອຍຈີນຊຸດທີ 3 ໄດ້ຈັດຂຶ້ນຢູ່ຫໍສະພາປະຊາຊົນປັກກິ່ງຢ່າງຄຶກຄື້ນ
第三届中国少数民族文艺会演开幕式文艺晚会在北京人民大会堂隆重开幕　新华社图

## 56 个民族奏颂和谐中华

金秋九月，第三届中国少数民族文艺会演在北京举行。中国少数民族文艺会演，是中国一项重要的文化活动。此次会演有来自中国各地 56 个民族的 4500 多名演职员在北京分别展演 33 台优秀节目。文艺使者们欢聚北京，共同奏响民族团结奋斗、共同繁荣发展的乐章！

# 56 ຊົນເຜົ່າສະແດງ

# ສັນລະເສີນຊາດຈີນສະໜົມກົມກຽວ




ເດືອນກັນຍາລະດູຮ່ວງໂຣຍນີ້,ງານສະແດງລວມສູນສິລະປະວັນນະຄະດີຊົນເຜົ່າສ່ວນໜ້ອຍຈີນຊຸດທີ 3 ໄດ້ຈັດຂຶ້ນຢູ່ປັກກິ່ງ. ງານສະແດງລວມສູນດັ່ງກ່າວເປັນການເຄື່ອນໄຫວທາງວັດທະນະທຳທີ່ສຳຄັນປະການໜຶ່ງຂອງຈີນ. ນັບແຕ່ປີ 1978 ປະຕິຮູບເປີດກວ້າງສູ່ພາຍນອກເປັນຕົ້ນມາໄດ້ຈັດຂຶ້ນປະສົບຜົນສຳເລັດສອງຊຸດມາແລ້ວ. ການລວມສູນສະແດງໄດ້ເພີ່ມພະລັງຊີວິດຈິດໃຈໃໝ່ໃຫ້ແກ່ປະຊາຊົນບັນດາເຜົ່າສ້າງສະຖານະພາບໃໝ່ໃນພາລະກິດສັງຄົມນິຍົມທີ່ມີສີສັນພິເສດຂອງຈີນຢ່າງບໍ່ຢຸດຢັ້ງ, ສ້າງສັງຄົມພໍຢູ່ພໍກິນຢ່າງຮອບດ້ານບົນເສັ້ນທາງບູລະນະສັງຄົມທີ່ສະໜົມກົມກຽວ.

ພິທີເປີດສາກງານລາຕີສິລະປະວັນນະຄະດີປະກອບໄປດ້ວຍ4 ພາກເຊັ່ນ: "ສຽງມ່ວນກ່ອມໃຈແຫ່ງລະດູໜາວ" "ສຽງເພງແຫ່ງລະດູບານ" "ຄວາມຝັນແຫ່ງລະດູຮ້ອນ" ແລະ "ສີສັນແຫ່ງລະດູຮ່ວງໂຣຍ", ໝູ່ນັກສະແດງຊົນເຜົ່າສ່ວນໜ້ອຍປ່ຽມລົ້ນໄປດ້ວຍນ້ຳໃຈກະຕືລືລົ້ນ ອາລົມເຜັດມັນ, ຂັບຮ້ອງໄປດ້ວຍວາດຟ້ອນທຳນອງເສບຕັ້ງແຕ່ເໜືອຕະຫຼອດໃຕ້, ມີເຄື່ອງເສບຊຸງພູພຽງຊິງໄຮ--ຕີເບດ, ຊຸງທົ່ວນ້ຳຂອງທົ່ງຫຍ້າມົງໂກນແລະອາລີລາງຕີນພູຊາງປ່າຍ.




ນັກສະແດງຊາວລ້ຽງປະສຸສັດຈາກຕີເບດພວມເລັ່ງລັດຫັດແອບວາດຟ້ອນທຳນອງເສບເຜົ່າຕີເບດ
来自西藏的农牧演员正在加紧排练藏族乐舞　新华社图



ຍູທ່າງສໍລະເສີນຄວາມຮັກຫອມປິຕຸພູມ, ສະແດງຄວາມຍໍຍ້ອງຄວາມສາມັກຄີຊົນເຜົ່າຢ່າງຄາລະວະສຸດໃຈ. ງານລາຕີອາບເອ້ໄປດ້ວຍສີສັນເອກະລັກຂອງຊົນເຜົ່າຢ່າງເຂັ້ມຂຸ້ນໂດຍຕະຫຼອດເວທີ, ຈຸດພິເສດຍຸກສະໄໝຊັດແຈ້ງອັນໄດ້ປາກົດພາບໜ້າເພິງພໍໃຈທີ່ບັນດາຊົນເຜົ່າຢູ່ຮ່ວມກັນດ້ວຍຄວາມປອງດອງແລະພັດທະນາຢ່າງສະໜິມກົມກຽວ.

ງານສະແດງລວມສູນຄັ້ງນີ້ມີນັກສະແດງຕ່າງ ໆທົ່ວປະເທດຈີນຕ່າງກໍ່ໄດ້ສະແດງລາຍການຍອດຍິ່ງ 33 ລາຍການ. ບັນດາທູດແຫ່ງສິລະປະວັນນະຄະດີຊຸມລຸມກັນຢູ່ປັກກິ່ງຢ່າງຊື່ນບານ, ພ້ອມກັນເສບບັນເລງເພງບຸກບືນສູ້ຊົນເພື່ອຄວາມສາມັກຄີຊົນເຜົ່າແລະຄວາມວັດທະນາຖາວອນ, ພ້ອມພໍ່າກັນເດີນກ້າວເຖິງໄຊຊະນະໃໝ່.



ໝູ່ນັກສະແດງກຳລັງສະແດງຢູ່ບົນເວທີເປີດສາກ　演员们在开幕式上的演出　新华社图



# ເວັບໄຊໂປເຄີໝີແພນດາໄດ້ຕັ້ງຂຶ້ນຢູ່ສປຈີນ

## 大熊猫博客网站在中国开设

一个名为“熊猫仔仔的小窝”的博客日前在中国主要门户网站——新浪网正式亮相。中国保护大熊猫的专家们期待通过“网络日记”这种新颖时尚的方式来唤起公众对这个地球上最古老的物种之一更多关注，共同关心和保护大熊猫。

"ເຮືອນຮັງນ້ອຍຂອງລູກໝີແພນດາ"ທີ່ມີຊື່ໂປເຄີ,ດຽວນີ້ໄດ້ຕັ້ງເວັບໄຊສຳຄັນຢູ່ຈີນເປັນທາງການທີ່ອິນເຕີເນັດຊິນລາງ.ບັນດານັກຊ່ຽວຊານທີ່ປົກປ້ອງໝີແພນດາຈີນຫວັງຢາກຜ່ານ"ບັນທຶກປະຈຳວັນເຄືອຂ່າຍ"ຊຶ່ງເປັນວິທີນິຍົມໃໝ່ນີ້ເພື່ອຮຽກຮ້ອງມະຫາຊົນໃຫ້ສົນໃຈຫຼາຍກວ່າເກົ່າສຳລັບແນວພັນແສນເກົ່າແກ່ໃນໂລກນີ້,ພ້ອມກັນເອົາໃຈໃສ່ແລະປົກປ້ອງໝີແພນດາ.

ຈາກມູມສຳຜັດດ້ວຍຕາທີ່ໂປເຄີຕັ້ງຢູ່ສູນຄົ້ນຄວ້າການແຜ່ພັນໝີແພນດາທີ່ເສັນຕູ໋ສາມາດສັງເກດເຫັນການກຳເນີດຂອງໝີແພນດາ,ທັງໄດ້ຈົດບັນທຶກເປັນຕົວຈິງຕັ້ງແຕ່ໄລຍະການກຳເນີດເກີດເປັນຂອງໝີແພນດາຕົວແມ່ໂຕໜຶ່ງທີ່ບໍ່ທັນຕັ້ງຊື່ໃຫ້ແລະສະພາບຊີວິດສະມາຊິກຄອບຄົວຂອງມັນຕະຫຼອດການເກີດເປັນຢູ່ລອດຂອງໝີແພນດາທີ່ຢູ່ບໍລິເວນ.ບັນດາເພື່ອນອິນເຕີເນັດຍັງສາມາດຜ່ານໂປເຄີຫຼິ້ງເຫັນຮູບພາບພາກສ່ວນທີ່ກ່ຽວຂ້ອງແລະຄື່ນຄວາມຖີ່ວີດີໂອ(Video frequency)ໂດຍກົງ.

ໝີແພນດາ(Panda))ເປັນສັດຊະນິດໜຶ່ງເກືອບສູນພັນທີ່ຫາຍາກໃນໂລກ.ປັດຈຸບັນນີ້ ໝີແພນດາປ່າໃນທົ່ວໂລກຍັງມີພຽງແຕ່ປະມານ 1590 ໂຕ,ສຳຄັນຢັ່ງຢາຍຢູ່ຕາມແຂວງເສຊວນແລະແຂວງສ່ານຊີປະເທດຈີນ. ນັບມາຮອດທ້າຍປີ 2005,ໝີແພນດາທີ່ຄົນເອົາມາລ້ຽງໃນທົ່ວໂລກມີຮອດ 180 ກວ່າໂຕ.

# ຕາໜ່າງທາງຫຼວງອາຊີ

## --ທາງຫຼວງສາກົນຄຸນໝິງ--ບາງ



ລົດແລ່ນຕາມທາງຫຼວງຄຸນໝິງ--ບາງກອກລະຫວ່າງຍ່ານທາງຢູນນານ

汽车在昆曼公路云南段上行驶　新华社图

## 亚洲公路网在延伸

——昆曼国际公路成为绿色通道

昆明至曼谷国际大通道是亚洲公路网中的一段，昆曼国际公路全长 1800 多公里，经过中国、老挝、泰国三国，在建设中采取“原有的植物保护好、荒凉的地段绿化好”等措施，全长 688 公里的云南境内路段建设成了绿色生态国际大通道。




ແຜນພາບທາງຫຼວງຄຸນໝິງ--ບາງກອກ　昆曼公路示意图

ຊ່ອງທາງໃຫຍ່ສາກົນຄຸນໝິງຫາບາງກອກ,ຍ່ານທາງພາຍໃນເຂດແດນແຂວງຢູນນານນັ້ນ ໄດ້ໃຊ້ມາດຕາການ "ປົກປັກຮັກສາຕົ້ນໄມ້ໃບຫຍ້າດັ່ງເດີມໃຫ້ເປັນຢ່າງດີແລະປູກປ່າຕາມຍ່ານດິນເຮື້ອຢ່າງຮຽບຮ້ອຍ "ໃນທ່າມກາງກໍ່ສ້າງຖະໜົນຫົນທາງ,ເພື່ອສ້າງຍ່ານທາງພາຍໃນເຂດແດນຢູນນານທີ່ມີລວງຍາວທັງໝົດ 688 ກິໂລແມັດໃຫ້ກາຍເປັນຊ່ອງທາງໃຫຍ່ສາກົນຢ່າງມີຊີວະພາບສີຂຽວ.ທາງຫຼວງສາກົນຄຸນໝິງຫາບາງກອກລວງຍາວທັງໝົດ 1800 ກວ່າກິໂລແມັດໂດຍຜ່ານຈີນ,ລາວແລະໄທສາມປະເທດ,ເປັນໂຄງການຈຸດສຸມອັນໜຶ່ງຂອງການຮ່ວມມືເສດຖະກິດອະນຸພາກພື້ນແມ່ນ້ຳຂອງ.

ທ່ານບາລີຫົວໜ້າກົມຄົມນາຄົມຂົນສົ່ງຂອງຄະນະກຳມະການ

# ກຳລັງຂະຫຍາຍອອກ

## ກອກກາຍເປັນຊ່ອງທາງສີຂຽວ



ເສດຖະກິດ--ສັງຄົມອາຊີ--ປາຊີຟິກສະຫະປະຊາຊາດກ່າວວ່າ: "ທາງຫຼວງຄຸນໝິງ--ບາງກອກແມ່ນຍ່ານທາງທີ່ກະຕຸ້ນຕັນໃຈຄົນທີ່ສຸດໃນຕາໜ່າງຖະໜົນຫົນທາງອາຊີເພາະວ່າມັນແມ່ນໝາກຜົນຂອງການຮ່ວມມືຮ່ວມແຮງລະຫວ່າງນາ ໆຊາດ,ຍ່ານທາງທີ່ສ້າງໃນເມືອງລາວນັບວ່າເປັນແບບຢ່າງອັນໜຶ່ງ.ທາງຫຼວງຜ່ານດິນລາວ,ຫາກແມ່ນປະເທດຈີນ,ໄທແລະທະນາຄານພັດທະນາອາຊີອອກທຶນ,ສະພາບຍ່ານທາງດັ່ງກ່າວນີ້ຢູ່ບ່ອນອື່ນອື່ນຍັງບໍ່ເຄີຍມີຕົວແບບມາກ່ອນ.ທາງຫຼວງຄຸນໝິງ--ບາງກອກມີບົດບາດຊຸກຍູ້ສົ່ງເສີມທີ່ສຳຄັນຕໍ່ການຄ້າລະຫວ່າງຈີນກັບໄທ.ສປປລາວກໍ່ຈະໄດ້ສອຍໃຊ້ທາງຫຼວງນີ້ປັບປຸງພື້ນຖານໂຄງລ່າງໃຫ້ດີຂຶ້ນ,ຕົວຢ່າງຄືເສັ້ນທາງ AH16 ຜ່ານດິນລາວແລະຫວຽດນາມ,ເມື່ອສ້າງສຳເລັດລົງແລ້ວ,ເລີ່ມຈາກດິນລາວໄປຮອດທ່າເຮືອດົງຫ່າຂອງຫວຽດນາມກິນໄລຍະທາງລົດພຽງແຕ່ຊົ່ວໂມງປາຍໜຶ່ງນັ້ນ,ເໝືອນກັບວ່າລາວກໍ່ມີປາກທາງອອກທະເລເຊັ່ນກັນ."

ທາງຫຼວງຄຸນໝິງ--ບາງກອກແມ່ນຍ່ານໜຶ່ງໃນເສັ້ນທາງໝາຍເລກ AH3 ຂອງຕາໜ່າງທາງຫຼວງອາຊີ,ເສັ້ນທາງ AH3 ເລີ່ມແຕ່ຄຸນໝິງໄປຫາກູ່ຍປາງ,ແຊງຖານ,ນານຊາງ,ຮັງເຈົາແລ້ວຊອດເຖິງຊຽງໄຮໂດຍກົງ.ທົ່ວຕາໜ່າງທາງຫຼວງອາຊີ ປຽບເໝືອນລະບົບວົງຈອນສາຍເລືອດໃຫຍ່,ຄວາມຍາວທັງໝົດ 1.4 ແສນກິໂລແມັດ,ຜ່ານ 32 ປະເທດໃນທະວີບອາຊີ.

ກ່ອນນີ້ປີ 1959,ຄະນະກຳມະການເສດຖະກິດ--ສັງຄົມອາຊີ--ປາຊີຟິກກໍ່ໄດ້ວາງແຜນກໍ່ສ້າງຕາໜ່າງທາງຫຼວງອາຊີມາແລ້ວ,ແຕ່ຮອດເດືອນເມສາປີ 2004ຈຶ່ງມີການສືບພ້າຕົວຈິງ,ປະເທດສະມາຊິກ 26 ປະເທດໄດ້ຈັດກອງປະຊຸມຄະນະກຳມະການເສດຖະກິດ--ສັງຄົມອາຊີ--ປາຊີຟິກຄັ້ງທີ 60 ຢູ່ຊຽງໄຮ,ໄດ້ພ້ອມກັນລົງນາມ《ສັນຍາລະຫວ່າງລັດຖະບານກ່ຽວກັບຕາໜ່າງທາງສາຍດ່ວນອາຊີ》,ແລະມີຜົນສັກສິດເປັນທາງການນັບຕັ້ງແຕ່ວັນທີ 4 ກໍລະກົດປີ 2005 ເປັນຕົ້ນໄປ.ໃນປະຈຸບັນ,ປະເທດລົງນາມໃນສັນຍາສະບັບດັ່ງກ່າວໄດ້ມີປະເທດຈີນ,ລາວ,ໄທ,ຫວຽດນາມ,ມຽນມາ,ອິນເດຍເປັນຕົ້ນ 28 ປະເທດ.ນີ້ເປັນສັນຍາລະຫວ່າງລັດຖະບານສະບັບທຳອິດໂດຍພາຍໃຕ້ການເປັນພິທີກອນຈັດຕັ້ງປະສົບຜົນສຳເລັດຂອງຄະນະກຳມະການເສດຖະກິດ--ສັງຄົມອາຊີ--ປາຊີຟິກ,ເປັນຂີດໝາຍຄວາມສະຖຽນລະພາບການເມືອງແລະການຮ່ວມມືເສດຖະກິດອາຊີກ້າວສູ່ລະດັບຂັ້ນສູງ.

ໃນປະຈຸບັນ,ລວມຍອດລົງທຶນຂອງຕາໜ່າງທາງຫຼວງໄດ້ສິ້ນກາຍ 26 ຕື້ໂດລາອາເມລິກາ,ຍ່ານທາງທີ່ສ້າງສຳເລັດໄປແລ້ວນັ້ນ 83%.ສັນຍາຕາໜ່າງທາງຫຼວງອາຊີໄດ້ຊຸກຍູ້ບັນດາລັດຖະບານເພີ່ມທະວີການລົງທຶນຖະໜົນຫົນທາງຫຼາຍຂຶ້ນອີກ,ຕາໜ່າງທາງຫຼວງອາຊີອັນເປັນວົງຈອນສາຍເລືອດໃຫຍ່ທາງເສດຖະກິດເສັ້ນນີ້ກຳລັງຂະຫຍາຍອອກຢ່າງບໍ່ຢຸດຢັ້ງ.

# ກອງປະຊຸມໃຫຍ່ສະຫະພັນດາລາສາດສາກົນຢືນຢັນລະບົບສຸລິຍະຈັກກະວານມີດາວເຄາະພຽງ 8 ດວງ

## 国际天文学联合会大会确认太阳系只有 8 颗行星

位居太阳系九大行星末席 70 多年的冥王星，自发现之日起其地位就备受争议。经过天文学界多年的争论以及国际天文学联合会大会日投票决定，冥王星不再属于行星，太阳系行星数目也因此降为 8 颗。

ດາວພະຍົມ(Pluto)ທີ່ຢູ່ທ້າຍດາວນົບພະເຄາະໃນລະບົບສຸລິຍະຈັກກະວານ 70 ປາຍປີມານັ້ນ,ນັບແຕ່ມື້ຄົ້ນພົບເປັນຕົ້ນມາຖານະດາວດວງນີ້ຖືກເອົາເປັນຂໍ້ປະເດັນ.ຜ່ານການຖົກຖຽງກັນໃນວົງການດາລາສາດມາຫຼາຍປີແລະວັນກອງປະຊຸມໃຫຍ່ສະຫະພັນດາລາສາດສາກົນປ່ອນບັດຕັດສິນວ່າ:ດາວພະຍົມບໍ່ສັງກັດດາວເຄາະອີກ,ຈຳນວນດາວເຄາະໃນລະບົບສຸລິຍະຈັກກະວານກໍ່ຫລຸດລົງເປັນ 8 ດວງ.



ອີງຕາມຄຳນິຍາມໃໝ່ທີ່ໄດ້ຜ່ານກອງປະຊຸມໃຫຍ່ສະຫະພັນດາລາສາດສາກົນ, "ດາວເຄາະ" ໝາຍເຖິງວັດຖຸເທິງຟ້າທີ່ປິ່ນອ້ອມດວງອາທິດ ອາໄສແຮງດູດຂອງຕົນສາມາດຜ່ານຜ່າແຮງແຂງກ້າເຮັດໃຫ້ວັດຖຸເທິງຟ້າເປັນລັກສະນະຮູບກົມ,ທັງສາມາດກຳຈັດວັດຖຸອື່ນ ໆທີ່ຢູ່ບໍລິເວນໂຄຈອນ.ແຕ່ວ່າໂຄຈອນດາວພະຍົມຕັດກັນກັບດາວພະເກດ(Neptune),ດ້ວຍເຫດນີ້ມັນບໍ່ສອດຄ່ອງກັບຄຳນິຍາມດັ່ງກ່າວຂ້າງເທິງ.ອີງຕາມຄຳນິຍາມໃໝ່,ດາວເຄາະໃນ ສຸລິຍະລະບົບປະກອບດ້ວຍດາວພະພຸດ,ດາວພະສຸກ,ໜ່ວຍໂລກ,ດາວພະອັງຄານ,ດາວພະຫັດ,ດາວພະເສົາ,ດາວເຈົ້າຟ້າ(Uranus)ແລະດາວພະເກດ(Neptune),ໝູ່ດາວເຫຼົ່ານີ້ລ້ວນແຕ່ຖືກຄົ້ນພົບກ່ອນປີ 1900.

ອີງຕາມຄຳນິຍາມໃໝ່,ວັດຖຸເທິງຟ້າ(Celestial body)ທີ່ມີລັກສະນະຮູບກົມແລະມີມວນສານພຽງພໍດັ່ງດຽວກັນ ແຕ່ບໍ່ສາມາດກຳຈັດວັດຖຸອື່ນ ໆໃນບໍລິເວນໂຄຈອນນັ້ນຖືກຮຽກວ່າ"ດາວເຄາະຕ່ຳ".ດາວພະຍົມກໍ່ແມ່ນດາວເຄາະຕ່ຳດວງໜຶ່ງ.ວັດຖຸອື່ນ ໆທີ່ປິ່ນອ້ອມດວງອາທິດທີ່ບໍ່ກົງກັບເງື່ອນໄຂດັ່ງກ່າວລ້ວນແຕ່ຖືກຮຽກເປັນ "ວັດຖຸເທິງຟ້າຂະໜາດນ້ອຍໃນສຸລິຍະລະບົບ".

ການກຳເນີດຄຳນິຍາມໃໝ່ຂອງດາວເຄາະເປັນວາລະແຫ່ງ"ປະຫວັດສາດ",ທ່ານແອັຄລີ ປະທານສະຫະພັນດາລາສາດສາກົນສະແດງວ່າ:ການຄົ້ນຄວ້າແລະອະພິປາຍກ່ຽວກັບດາວເຄາະນີ້,ຕໍ່ໄປພາຍໜ້າຍັງຈະສືບຕໍ່ອີກ,ສຳລັບການເກີດມີຄຳນິຍາມດັ່ງກ່າວນີ້ ມັນເປັນຫຼັກຂີດໝາຍຂອງການຄົ້ນຄວ້າດາລາສາດ.




ຊາວໜຸ່ມເຍົາວະຊົນບັນດາປະເທດພ້ອມກັນຊັກວ່າວ "ນົກສັນຕິພາບ", ສົ່ງພອນອັນປະເສີດຕໍ່ສັນຕິພາບຂອງໂລກ 各国青少年，共同放飞"和平鸽"风筝，表达对世界和平的美好祝愿 新华社图

# ຊາວໜຸ່ມເຍົາວະຊົນ 5 ທະວີບສັນລະເສີນສັນຕິພາບໃນເພິງໄຫຼ່

## 五大洲青少年代表聚山东蓬莱颂和平

首次以联合国教科文组织常规活动形式举办的第七届中国蓬莱"和平颂"国际青少年文化艺术盛典（简称"和平颂"）在山东省蓬莱市举行，来自五大洲 20 多个国家的近 2 万名青少年携手用歌声、书画、舞蹈表达他们对世界和平的企盼。

ງານມະຫະກຳສິລະປະວັດທະນະທຳຊາວໜຸ່ມເຍົາວະຊົນສາກົນ "ສັນລະເສີນສັນຕິພາບ" ທີ່ເພິງໄຫຼ່ສປຈີນສະໄໝທີ 7 ຊຶ່ງຈັດທຳດ້ວຍຮູບການເຄື່ອນໄຫວປະຈຳປີກກະຕິຂອງອົງການຢູເນັສໂກສະຫະປະຊາຊາດເປັນຄັ້ງທຳອິດໄດ້ຈັດຂຶ້ນທີ່ເມືອງເພິງໄຫຼ່ແຂວງຊານຕຸ້ງ, ຊາວໜຸ່ມເຍົາວະຊົນເກືອບ 2 ແສນຄົນທີ່ມາຈາກ 20 ກວ່າປະເທດໃນ 5 ທະວີບຈັບມືຖືແຂນກັນສະແດງຄວາມຫວັງຕໍ່ສັນຕິພາບຂອງໂລກດ້ວຍສຽງເພງ, ຮູບແຕ້ມຂຽນໜັງສືແລະອາດຟ້ອນນາຕະສິນເປັນຕົ້ນ.

ງານມະຫະກຳ "ສັນລະເສີນສັນຕິພາບ" ດັ່ງກ່າວເອົາສັນຕິພາບເປັນຫົວຂໍ້, ໂດຍຜ່ານການເຄື່ອນໄຫວເຊື້ອເຊີນເອົາຊາວໜຸ່ມເຍົາວະຊົນຂອງບັນດາປະເທດໃນໂລກມາຮ່ວມການປະດິດຄິດແຕ້ມຂ




ໃນງານຊຸມນຸມນາງສາວໄທມືຖືຄ້ອນຕີແລະກະເບື້ອງສະແດງຄວາມໄຫວ້ວອນຫາສັນຕິພາບ 在祈愿和平集会上，一名泰国少女手持锤子和玩具碎片，表达祈愿和平的心愿 新华社图

ຮູບ, ການສະແດງສິລະປະວັນນະຄະດີ, ການແຂ່ງຂັນກິລາແລະເວທີປາໄສສັນຕິພາບມາວິ່ງວອນສັນຕິພາບ, ປາຖະໜາສັນຕິພາບ, ບົ່ມສ້າງສະຕິປົກປັກຮັກສາສັນຕິພາບ, ຄັດຄ້ານສົງຄາມ ແລະຄວາມຮຸນແຮງຂອງຊາວໜຸ່ມເຍົາວະຊົນ.

ການເຄື່ອນໄຫວກ່າວສຸນທອນພົດຂອງຊາວໜຸ່ມເຍົາວະຊົນສາກົນທີ່ມີຫົວເລື່ອງ "ມິດຕະພາບແລະສັນຕິພາບ" ກໍ່ແມ່ນລາຍການອັນໜຶ່ງທ່າມກາງການເຄື່ອນໄຫວຫົວຂໍ້ສັນຕິພາບທີ່ຫຼາຍຫຼາກໃນງານມະຫະກຳສິລະປະວັນນະຄະດີຊາວໜຸ່ມເຍົາວະຊົນສາກົນ "ສົ່ງເສີມສັນຕິພາບ" ສະໄໝທີ 7 ກຳລັງຈັດຂຶ້ນຢູ່ເຜິງໄຫຼ່ໃນຂະນະດຽວກັນ, ຈຸດປະສົງງານມະຫະກຳດັ່ງກ່າວກໍ່ເພື່ອທຳການສຶກສາຊາວໜຸ່ມເຍົາວະຊົນກ່ຽວກັບສັນຕິພາບ, ຜູ້ແທນຊາວໜຸ່ມເຍົາວະຊົນ 20 ກວ່າຄົນທີ່ມາແຕ່ປະເທດຈີນ, ອາເມລິກາ, ສ.ເກົາຫຼີແລະອິນເດຍໄດ້ກ່າວສຸນທອນພົດວິ່ງວອນສັນຕິພາບແລະມິດຕະພາບດ້ວຍພາສາອັງກິດຕາມລຳດັບ.

ນອກຈາກນີ້ ໃນງານມະຫະກຳ "ສົ່ງເສີມສັນຕິພາບ" ສະໄໝທີ 7 ຍັງໄດ້ຈັດການເຄື່ອນໄຫວຄັດຄ້ານອາວຸດຮຸນແຮງທຽມ, ແຕ້ມຮູບສັນຕິພາບຍາວ 10 ພັນແມັດແລະເວທີປາໄສສັນຕິພາບທີ່ເຜິງໄຫຼ່ເປັນຕົ້ນ.

ຕັ້ງແຕ່ປີ 2000 ເປັນຕົ້ນມາ, ເມືອງເຜິງໄຫຼ່ຊານຕຸ້ງໄດ້ຈັດງານມະຫະກຳ "ສົ່ງເສີມສັນຕິພາບ" ມາແລ້ວ 6 ສະໄໝປະສົບຜົນສຳເລັດ, ການເຄື່ອນໄຫວລາຍນີ້ຖືກອົງການອຸຍແນັສໂກສະຫະປະຊາຊາດຖືເປັນ "ງານຊຸມນຸມໃຫຍ່ທີ່ສຸດປະການໜຶ່ງທີ່ຈັດຂຶ້ນເພື່ອວິ່ງວອນສັນຕິພາບຂອງມວນມະນຸດປະຈຸບັນ", ແລະຖືກຮັບຮອງບັນຈຸເຂົ້າເປັນການເຄື່ອນໄຫວປະຈຳຕາມປົກກະຕິ, ແຕ່ລະປີຈັດຂຶ້ນເທື່ອໜຶ່ງຢູ່ເມືອງເຜິງໄຫຼ່.





文：苏雯雯




ສະຖານທີ່ກອງປະຊຸມສຳມະນາສື່ມວນຊົນໂທລະພາບປະເທດອາຊຽນສ່ວນໜຶ່ງແລະພາກພື້ນສາມລ່ຽມແພນຈູ
东盟部分国家及泛珠三角区域电视媒体座谈会会议现场

## 老挝国家电视台
## 与中国电视媒体积极开展多方合作

东盟部分国家及泛珠三角电视媒体座谈会在昆明举行，老挝国家电视台副总监分萨瓦夫米（PHENGSAVAT Phoumy）、老挝国家电视台新闻办主任苏万 · 潍莱森和电视台摄影记者苏班前来参加此次会议。老挝国家电视台副总监分萨瓦夫米（PHENGSAVAT Phoumy）表示，老挝国家电视台与中国电视媒体正在积极开展多方合作。



ທ່ານເພັງສະຫວັດ ພູມີ ຮອງຜູ້ອຳນວຍການສະຖານີໂທລະພາບແຫ່ງຊາດລາວຕ້ອນຮັບການເຂົ້າຢ້ຽມຂອງນັກຂ່າວ《ຈຳປາ》.　　ຖ່າຍພາບ: ລີຈີຮວາ
老挝国家电视台副总监分萨瓦夫米接受本刊记者参访　李吉华 摄

# ສະຖານີໂທລະພາບແຫ່ງຊາດລາວກັບສື່ມວນຊົນໂທ

# ລະພາບຈີນຕັ້ງໜ້າດຳເນີນການຮ່ວມມືຫຼາຍດ້ານ

ກອງປະຊຸມສຳມະນາສື່ມວນຊົນປະເທດອາຊຽນສ່ວນໜຶ່ງແລະສາມລ່ຽມແພນຈູ້ໄດ້ຈັດຂຶ້ນຢູ່ຄຸນໝິງ, ທ່ານເພັງສະຫວັດ ພູມີ ຮອງຜູ້ອຳນວຍການສະຖານີໂທລະພາບແຫ່ງຊາດລາວ, ທ່ານສຸວັນ ວິໄລແສງ ຫົວໜ້າຫ້ອງການຂ່າວສະຖານີໂທລະພາບແຫ່ງຊາດລາວແລະທ່ານສຸບັນ ນັກຂ່າວຖ່າຍພາບສະຖານີໂທລະພາບກໍ່ໄດ້ເດີນທາງມາຮ່ວມກອງປະຊຸມຄັ້ງນີ້. ທ່ານເພັງສະຫວັດ ພູມີ ຮອງຜູ້ອຳນວຍການສະແດງວ່າ:ສະຖານີໂທລະພາບແຫ່ງຊາດລາວກັບສື່ມວນຊົນໂທລະພາບຈີນພວມຕັ້ງໜ້າດຳເນີນການຮ່ວມມືຫຼາຍ ໆດ້ານ.

ສະຖານີໂທລະພາບແຫ່ງຊາດລາວສ້າງຕັ້ງຂຶ້ນເມື່ອປີ1983, ມາຮອດດຽວນີ້ກໍ່ມີປະຫວັດ 23 ປີມາແລ້ວ, ປະຈຸບັນມີລາຍການສອງຊ່ອງ ໂດຍຜ່ານດາວທຽມຖ່າຍທອດເຖິງປະເທດຕ່າງ ໆ. ສະຖານີໂທລະພາບລາວກັບສະຖານີໂທລະພາບປະເທດອາຊຽນສ່ວນໜຶ່ງເຄີຍໄດ້ມີການຮ່ວມມືຈຳນວນໜຶ່ງມາແລ້ວທາງດ້ານການເຝິກອົບຮົມບຸກຄະລາກອນ. ສະຖານີໂທລະພາບແຫ່ງຊາດລາວກັບສະຖານີໂທລະພາບສູນກາງຈີນກໍ່ໄດ້ມີການຮ່ວມມື, ທັງສອງຝ່າຍກຳລັງວາງແຜນຮ່ວມມືສ້າງຊ່ອງທີ 3 ໃນລາວ, ແລະຈະເອົາລາຍການ(CCTV–4)ຊ່ອງສາກົນດ້ວຍພາສາຈີນທີ່ຖ່າຍທອດຕໍ່ທົ່ວໂລກຂອງສະຖານີໂທລະພາບສູນກາງຈີນທຳການຖ່າຍທອດຢູ່ເມືອງລາວ. ພ້ອມດຽວກັນນັ້ນ, ສະຖານີໂທລະພາບແຫ່ງຊາດລາວກັບສະຖານີໂທລະພາບສູນກາງຈີນແລະສະຖານີໂທລະພາບຢູນນານຮ່ວມມືຖ່າຍທຳຟິມເອກະສານກ່ຽວກັບການພັດທະນາອະນຸພາກພື້ນແມ່ນ້ຳຂອງ; ແລະທຳການຮ່ວມມືກັບສະຖານີໂທລະພາບຢູນນານທາງດ້ານການເຝິກອົບຮົມບຸກຄະລາກອນພະນັກງານ, ຍັງຈະແລກປ່ຽນແລະຮ່ວມມືກັນທາງດ້ານເຕັກນິກຖ່າຍທອດລາຍການໂທລະພາບອີກ.

ທ່ານເພັງສະຫວັດ ພູມີ ຮອງຜູ້ອຳນວຍການໂທລະພາບແຫ່ງຊາດລາວກ່າວວ່າ:ໃນປະຈຸບັນ ຄົນລາວທີ່ໄປທ່ອງທ່ຽວເມືອງ



ທ່ານເພັງສະຫວັດ ພູມີ ຮອງຜູ້ອຳນວຍການສະຖານີໂທລະພາບແຫ່ງຊາດລາວກ່າວຄຳປາໄສທີ່ກອງປະຊຸມ
ຖ່າຍພາບ: ລີຈີຮວາ

老挝国家电视台副总监分萨瓦夫米在会上发言　　李吉华 摄

ຈີນຫຼວງຫຼາຍພາຍມາກ, ເຂົາເຈົ້າມີຄວາມສົນໃຈຫຼາຍຕໍ່ສະພາບການພັດທະນາເສດຖະກິດສັງຄົມແລະວັດທະນະທຳການທ່ອງທ່ຽວແລະດ້ານຕ່າງ ໆຂອງເມືອງຈີນ, ຄົນລາວມີຫຼາຍຄອບຄົວທີ່ມີເງື່ອນໄຂດີກໍ່ສົ່ງລູກຫຼານຂອງຕົນໄປສຶກສາຮ່ຳຮຽນຢູ່ປະເທດຈີນ. ຂ້າພະເຈົ້າເອງມາຄຸນໝິງເປັນເທື່ອທຳອິດ, ໄດ້ໄປທ່ຽວຊົມຈຸດຊົມວິວທີ່ສວຍງາມຫຼາຍບ່ອນແລ້ວ. ເມືອງລາວກໍ່ເປັນປະເທດທີ່ມີພູມພາບທຳມະຊາດສວຍສົດງົດງາມ, ປະຊາຊົນທີ່ຮັກແຂກແພງຄົນມີຄວາມກະຕືລືລົ້ນຄອງຄອຍຕ້ອນຮັບເພື່ອນອາຊີບຮ່ວມງານສື່ມວນຊົນແລະຜູ້ຊີ້ງຄຸນວຸດທິບັນດາວົງການສັງຄົມເດີນທາງໄປຢ້ຽມຢາມທັດສະນາຈອນທ່ອງທ່ຽວເມືອງລາວດ້ວຍ.



文：苏雯雯




ຄູອາຈານວິທະຍາໄລຫຼອມໂລຫະໄປຝຶກຝົນພາກປະຕິບັດຢູ່ລາວຖ່າຍຮູບກັບຄະນະນຳໂຮງຮຽນ ຖ່າຍພາບ: ຊູເວີນເວີນ 赴老挝实践锻炼的冶专教师与学校领导合影 苏雯雯 摄

## 昆明冶专教师赴老挝实践锻炼

云南省昆明冶金高等专科学校9名教师赴老挝百细华侨公学与老挝沙湾纳吉省素旺崇德学校实践锻炼。他们都是学校经过层层考核从众多报名者中挑选出来、并经过相关培训的。在两年的时间里，他们将在这上述两所学校教授中文、数学、英语和美术等课程。




ຄູອາຈານວິທະຍາໄລຫຼອມໂລຫະໄປຮອດເມືອງລາວໄດ້ຮັບການຕ້ອນຮັບຢ່າງອົບອຸ່ນຈາກສະມາຄົມຈີນທີ່ສະຫວັນນະເຂດ
赴老挝的冶专教师受到了沙湾拿吉中华理事会的热情接待

# ຄູອາຈານວິທະຍາໄລຫຼອມໂລຫະຄຸນໝິງ ໄປຝຶກຝົນພາກປະຕິບັດຢູ່ສປປລາວ

ຄູອາຈານ 9 ທ່ານໃນວິທະຍາໄລຫຼອມໂລຫະຄຸນໝິງແຂວງຢູນນານໄດ້ເດີນທາງໄປຝຶກຝົນພາກປະຕິບັດຢູ່ໂຮງຮຽນຈີນຕ່າງດ້າວປາກເຊແລະໂຮງຮຽນສຸວັນສົງເຕີແຂວງສະຫວັນນະເຂດໃນເມືອງລາວ.

ຄູອາຈານທີ່ໄປຝຶກຝົນພາກປະຕິບັດໃນເມືອງລາວເທື່ອນີ້ລວມມີ 10 ທ່ານ,ໃນນັ້ນມີ 9 ທ່ານແມ່ນຄູອາຈານວິທະຍາໄລຫຼອມໂລຫະຄຸນໝິງ.ຄູອາຈານເຫຼົ່ານີ້ລ້ວນແຕ່ໄດ້ຜ່ານການຄັດເລືອກ

ຈາກຜູ້ສະເໜີຕົວ ໂດຍກວດສອບເປັນແຕ່ລະຂັ້ນ, ເພື່ອໃຫ້ເຂົາເຈົ້າຊາບຊຶ້ງຮັບຮູ້ໃນລະດັບໃດລະດັບໜຶ່ງກ່ຽວກັບຮີດຄອງພື້ນແຜ່ນແລະຂະໜົບປະເພນີວັດທະນະທຳໃນເມືອງລາວ, ທາງວິທະຍາໄລໄດ້ແຕ່ງຜູ້ຊ່ຽວຊານຈຳເພາະທຳການອົບຮົມສ່ວນກ່ຽວຂ້ອງຕໍ່ເຂົາເຈົ້າ. ໃນໄລຍະເວລາສອງປີຄູອາຈານ 10 ທ່ານຈະໄດ້ຖ່າຍທອດຫຼັກສູດພາສາຈີນ ຄະນິດສາດ ພາສາອັງກິດແລະວິຈິດສິນຢູ່ ໂຮງຮຽນຈີນຕ່າງດ້າວປາກເຊແລະໂຮງຮຽນສຸວັນສົງເຄີແຂວງສະຫວັນນະເຂດເມືອງລາວ.



ຢູ່ງານຈັດສົ່ງບັນດາຄູອາຈານ, ທ່ານລີເວີນຮວາ ຮອງປະທານຄະນະອຳນວຍການໄດ້ຕາງໜ້າໃຫ້ໂຮງຮຽນສອງຫຼັງດັ່ງກ່າວສະແດງຄວາມຍິນເຊີຍຄູອາຈານທີ່ຈະໄປສິດສອນຢູ່ເມືອງລາວ. ທ່ານລີເວີນຮວາກ່າວວ່າ: ການຮ່ວມມືລະຫວ່າງ ໂຮງຮຽນຈີນຕ່າງດ້າວປາກເຊໃນລາວກັບວິທະຍາໄລຫຼອມ ໂລຫະຄຸນໝິງມີປະສິດທິຜົນຢ່າງຍິ່ງ, ມັນມີຜົນດີຕໍ່ການເສີມຂະຫຍາຍມິດຕະພາບລາວ--ຈີນທັງສອງຝ່າຍ, ຕໍ່ໄປທັງສອງຝ່າຍຈະອອກແຮງຮ່ວມມືກັນຢ່າງສະໜິດແໜ້ນຕື່ມອີກ, ພ້ອມກັນຮອງຂໍສ້າງຕັ້ງວິທະຍາຄານຂົງຈື້ຢູ່ໃນເມືອງລາວອີກ.

ຈຽງຈຸນຮູຄູອາຈານວິທະຍາໄລຫຼອມ ໂລຫະຄຸນໝິງໄດ້ຕາງໜ້າຄູອາຈານທີ່ຈະໄປເມືອງລາວສະແດງຄວາມຄິດເຫັນວ່າ: ເຂົາເຈົ້າຍຶດຖືນະ ໂຍບາຍການສຶກສາທີ່ປິ່ນອ້ອມ "ທຸກສິ່ງທຸກຢ່າງເພື່ອນັກຮຽນນັກສຶກສາ", ເຮັດໜ້າວຽກປະຈຳຂອງຕົນຢ່າງເອົາຈິງເອົາຈັງ, ແລະຈະພະຍາຍາມຮໍ່າຮຽນພາສາລາວ, ຊາບຊຶ້ງຮັບຮູ້ວັດທະນະທຳແລະຮີດຄອງພື້ນແຜ່ນຂອງປະຊາຊົນລາວ. ພວກເຂົາເຈົ້າຈະອຸທິດກຳລັງເຫື່ອແຮງຂອງຕົນເພື່ອເສີມຂະຫຍາຍມິດຕະພາບຂອງສອງຝ່າຍ, ແຕ່ງບົດເພງມິດຕະພາບຈີນ--ລາວເພື່ອໃຫ້ກາຍເປັນຜູ້ກໍ່ສ້າງຂົວສະພານແຫ່ງມິດຕະພາບຈີນ--ລາວ.




ວິທະຍາໄລຫຼອມ ໂລຫະຄຸນໝິງມອບຂອງຂວັນແກ່ ໂຮງຮຽນສຸວັນສົງເຄີເມືອງລາວ　昆明冶金高等专科学校向老挝素望莱德学校捐赠礼品

文：刘歌 任建民



# ສປປລາວພະຍາຍາມເຊື່ອມໂຍງກັບໂລກ

## 老挝努力与世界接轨

在老挝，现代化的机场，医院、公路，桥梁等几乎都是外国援助的。国际社会都愿意帮助他，老挝正在努力与世界接轨。



ນາງແບບໄດ້ສະແດງ ໂທລະສັບມືຖືແບບໃໝ່ໃນງານວາງສະແດງສິນຄ້າສື່ສານເອເລັກ ໂຕຼນິກຊຸດປະຖົມມະເລີດທີ່ນະຄອນຫຼວງວຽງຈັນ

两名模特在老挝首都万象举行的首届电子通讯商品展上展示新型手机　新华社图

ຢູ່ເມືອງລາວ,ເດີ່ນບິນທີ່ທັນສະໄໝ, ໂຮງໝໍ,ຖະໜົນຫົນທາງແລະຂົວສະພານເກືອບຈະແມ່ນການຊ່ວຍເຫຼືອຈາກຕ່າງປະເທດທັງສິ້ນ.ປະຊາຄົມ ໂລກກໍ່ຍິນດີຊ່ວຍເຫຼືອລາວ.

ແຕ່ວ່າ ຊັບພະຍາກອນປ່າໄມ້,ແຮ່ທາດ,ພະລັງນ້ຳແລະການທ່ອງທ່ຽວໃນເມືອງລາວພັດອຸດົມສົມບູນດີດັກ,ພູມພາບທຳມະຊາດສົດສວຍ,ເມື່ອເຮົາແນມລົງຈາກເຄື່ອງບິນຈະເຫັນປ່າດົງຂຽວສົດງົດງາມສຸດຊົ່ວຕາ;ມີບໍ່ຄຳບໍ່ທອງຈຳນວນໜຶ່ງກຳລັງລົງມືຂຸດຄົ້ນ;ເມືອງເກົ່າແກ່ຫຼວງພະບາງແລະວັດພູຈຳປາສັກຍັງຖືກຮັບຮອງເຂົ້າບັນຊີລາຍຊື່ມໍລະດົກວັດທະນະທຳ ໂລກອີກ. ໄປພ້ອມ ໆກັບການປັບປຸງເງື່ອນໄຂຄົມນາຄົມໃຫ້ດີຂຶ້ນແລະຍົກສູງຄຸນະພາບບໍລິການທາງດ້ານ ໂຮງແຮມ,ແຂກທ່ອງທ່ຽວຕ່າງ



ປະເທດພວມເພີ່ມຫຼາຍຂຶ້ນຊັກໄຊ້,ປີທີ່ແລ້ວມີຮອດ 8 ແສນຖ້ຽວຄົນ,ປີນີ້ຄົງຈະມີຫວັງລື່ນກາຍລ້ານຖ້ຽວຄົນ.

ສະຫາຍຈັນທາລວງສີທີ່ເປັນເພື່ອນຕິດຕາມຊີ້ແຜນທີ່ກ່າວວ່າ: ເຖິງວ່າເມືອງລາວຢູ່ໄກຈາກທະເລ,ເມື່ອໃດທາງລົດຊອດຫາກັນ,ເມືອງລາວຈະກາຍເປັນທາງລັດທີ່"ເດີນຜ່ານ"ຂອງບັນດາປະເທດ.ທາງຫຼວງຄຸນໝິງຫາບາງກອກທີ່ຜ່ານແດນລາວນັ້ນກໍ່ສ້າງສຳເລັດໄປສ່ວນໜຶ່ງແລ້ວ,ພາຍຫຼັງເປີດໃຫ້ລົດແລ່ນໂດຍຕະຫຼອດທາງມັນຈະກາຍເປັນແຖບທາງເສດຖະກິດແຕ່ເໜືອຕະຫຼອດໃຕ້ທີ່ເຊື່ອມໂຍງອະນຸພາກພື້ນແມ່ນ້ຳຂອງ;ຍັງມີທາງເລກທີ 9 ຂອງລາວທີ່ພວມສ້າງຢູ່,ມັນຜ່ານຫວຽດນາມຊອດເຖິງທ່າເຮືອດົງຫາໂດຍກົງ.ລັດຖະບານລາວມີແຜນການອະນາຄົດນຳເຂົ້າສັດທະເລຈາກຫວຽດນາມ,ແລ້ວລຳລຽງສົ່ງໄປຂາຍຢູ່ພາກອີສານໄທ,ເພາະມັນໄວກວ່າຂົນສົ່ງສັດທະເລຈາກອ່າວໄທຫຼາຍເທົ່າ.

ທີ່ປຶກສາສີປຽນຊຸນໃນຫ້ອງການຄ້າສະຖານທູດຈີນປະຈຳລາວກໍ່ໃຫ້ທັດສະນະວ່າ:ຢູ່ເມືອງລາວ ທະແນມແຕ່ເຮັດໂຄງການໃຫຍ່ໃຫຍ່ສຳເລັດໂດຍດີສັກ 2 ໂຄງການກໍ່ສາມາດຊັກຈູງເອົາໂຄງການຫຼາຍແຫ່ງ.ສຳລັບດ້ານນີ້ແລ້ວ ທຸລະກິດໂທລະຄົມລາວອາດເປັນຕົວແບບນຳໜ້າກ່ອນໝູ່,ປະຈຸບັນ ທົ່ວເມືອງລາວມີຜູ້ໃຊ້(ໂທລະສັບ)ມືຖື 6 ແສນໜ່ວຍແລະໂທລະສັບຕັ້ງໂຕະ1.1ແສນໜ່ວຍ.ບໍ່ວ່າທາງດ້ານລະດັບລາຄາຫຼືຄຸນະພາບບໍລິການຮັບໃຊ້,ທຸລະກິດໂທລະຄົມລາວກໍ່ໄດ້ເລີ່ມເຊື່ອມໂຍງກັບໂລກມາແລ້ວ.




ຢູ່ຖະໜົນການຄ້ານະຄອນຫຼວງວຽງຈັນລົດລາແລ່ນສວານສົນກັນບໍ່ຂາດສາຍ ຖ່າຍພາບ: ຊູເວີນເວີນ 在老挝首都万象，商业街上车水马龙 苏雯雯 摄

文：刘歌 任建民 图：张惠平




ໝູ່ນັກຮຽນຈົບຊັ້ນພາກັນຮ້ອງເພງຈົບຊັ້ນ　　全体毕业生高唱毕业歌

# ຂົວສະພານແຫ່ງວັດທະນະທຳທີ່ປະສານເຂົ້າກັນ

## 文化交融的桥梁

在老挝首都万象，中华理事会下属的寮都公学是全东南亚第二大华文学校。学校从幼儿园开始一直到高中，采用和中国国内一样的教材和教学体制，用汉语和老挝语同时授课。在这里，学生们不单单学知识、学语言，更重要的是同时接受了中老两国文化的熏陶。

ໃນປະເທດອາຊີອາຄະເນ, ຈຳນວນຊາວຈີນຕ່າງດ້າວໃນເມືອງລາວນັ້ນແມ່ນໜ້ອຍທີ່ສຸດ, ກວມອັດຕາສ່ວນລວມຍອດພົນລະເມືອງລາວບໍ່ຮອດ 1%. ແຕ່ໃນທາງດ້ານການແລກປ່ຽນວັດທະນະທຳຈີນ--ລາວ, ຊາວຈີນພັດໄດ້ເສີມຂະຫຍາຍຄຸນປະໂຫຍດບໍ່ໄດ້ໜ້ອຍ.

ພວກເຮົາມາຮອດຖະໜົນອານຸ--ຖະໜົນຊາວຈີນທີ່ນະຄອນຫຼວງວຽງຈັນ, ໄດ້ໄປແວ່ຢາມສະມາຄົມຈີນເຊິ່ງເປັນອົງກອນຈັດຕັ້ງຊາວຈີນຕ່າງດ້າວທີ່ໃຫຍ່ກວ່າໝູ່ໃນເມືອງລາວ. ສະມາຄົມດັ່ງກ່າວຕັ້ງຂຶ້ນເມື່ອປີ 1998, ຖ້າຈະທວນຄືນປະຫວັດໄກກວ່ານີ້ ນັ້ນແມ່ນຫວຍກວານຈີນ(ຫໍສະມາຄົມຈີນ)ທີ່ຕັ້ງຂຶ້ນ1937 ພຸ້ນ. ພາຍໃຕ້ສະມາຄົມຍັງມີໂຮງກຸສົນແລະສະມາຄົມແມ່ຍິງ, ໃນນັ້ນ ໂຮງຮຽນທີ່ສອນພາສາຈີນ 5 ຫຼັງຢູ່ຢັ້ງຢາຍຕາມແຫ່ງຕ່າງໆໃນເມືອງລາວທີ່ມີຂະໜາດແລະມີຜົນສະທ້ອນດີດັກ. ຢູ່ນະຄອນຫຼວງວຽງຈັນ, ໂຮງຮຽນແຫຼວຕູ້ທີ່ສັງກັດສະມາຄົມນັ້ນເປັນໂຮງຮຽນສອນພາສາຈີນທີ່ໃຫຍ່ອັນດັບສອງທົ່ວອາຊີອາຄະເນ. ໂຮງຮຽນເລີ່ມສອນຕັ້ງແຕ່ອະນຸບານຮອດມັດທະຍົມປາຍໂດຍນຳໃຊ້ປຶ້ມຫຼັກສູດແລະລະບົບການສອນແບບດຽວກັບພາຍ

ໃນເມືອງຈີນ, ຖ່າຍທອດບົດຮຽນດ້ວຍພາສາຈີນແລະພາສາລາວພ້ອມກັນ. ຊຸມໝູ່ນັກຮຽນຢູ່ສະຖານທີ່ແຫ່ງນີ້ ບໍ່ພຽງແຕ່ຮຽນວິຊາຄວາມຮູ້, ຮຽນພາສາປາກເວົ້າ, ສຳຄັນກວ່ານັ້ນແມ່ນຄວບຄູ່ໄປພ້ອມເພື່ອຮັບເອົາການບົ່ມສອນຈາກວັດທະນະທຳສອງຊາດຈີນ--ລາວອີກ.

ນັກຮຽນຜູ້ຮຽນຢູ່ໂຮງຮຽນແຫຼວຕູ້ 13 ພັນກວ່າຄົນນັ້ນ, ມີ 1200 ປາຍຄົນກໍ່ບໍ່ສູ້ແມ່ນລູກຫຼານຊາວຈີນ. ນັບທັງລູກສາວສອງຄົນຂອງທ່ານຈູມມະລີ ໄຊຍະສອນປະທານປະເທດລາວດຽວນີ້ກໍ່ກຳລັງຮຽນຢູ່ໂຮງຮຽນດັ່ງກ່າວ. ຫຼານສາວຂອງອະດີດປະທານປະເທດແລະລູກເຕົ້າຂອງບັນດາລັດຖະມົນຕີກໍ່ໄດ້ຄັດເລືອກເອົາໂຮງຮຽນແຫຼວຕູ້. ສ່ວນລູກສາວທັງສອງຂອງປະທານຈູມມະລີ ໄຊຍະສອນກໍ່ໄດ້ຮັບການສຶກສາແລະຮ່ວມການເຄື່ອນໄຫວຂອງໂຮງຮຽນເໝືອນກັບນັກຮຽນອື່ນ ໆ ໂດຍບໍ່ມີສິ່ງພິເສດແຕ່ປະການໃດ. ຕາມປະເພນີ ເມື່ອໃດເຮືອນຂອງຊາວຈີນຫາກມີງານດອງຫຼືງານຊາປະນະກິດສົບ, ທາງໂຮງຮຽນມັກແຕ່ງຄູອາຈານແລະນັກຮຽນໄປຊ່ອຍວຽກ. ທາງໂຮງຮຽນກ່າວວ່າ: "ທຳອິດພວກເຮົາກໍ່ບໍ່ກ້າຈະໃຫ້ລູກຫຼານຂອງພະນັກງານລັດຖະກອນຊັ້ນສູງເຂົ້າຮ່ວມການເຄື່ອນໄຫວດັ່ງກ່າວ, ແຕ່ພາຍຫຼັງມາອາດຈະແມ່ນຜູ້ໃຫຍ່ບ້ານປຸກລະດົມສົ່ງເສີມ, ຂະເຈົ້າເປັນເຈົ້າການຮ້ອງຂໍເຂົ້າຮ່ວມນຳ. ຈາກນັ້ນມາຂະເຈົ້າກໍ່ລ້ວນແຕ່ໄປຊ່ອຍວຽກ ຮັບຕ້ອນແຂກຄົນຄືກັນກັບເພື່ອນນັກຮຽນອື່ນອື່ນ. ທ່ານເຊັນສວນແນະນຳໃຫ້ຮູ້ວ່າ: ລັດຖະບານສອງປະເທດຈີນ--ລາວໄດ້ເອົາຈິດໃສ່ໃຈນຳການພັດທະນາຂອງໂຮງຮຽນແຫຼວຕູ້. ລັດຖະບານຈີນໄດ້ຈັດສົ່ງຜູ້ອາສາສະໝັກມາດຳລົງອາຊີບສອນຢູ່ພາກມັດທະຍົມປາຍໃນໂຮງຮຽນ, ຄົນຂ່າວໄດ້ພົບໜ້າກັບຄູສອນສອງທ່ານທີ່ໂຮງຮຽນຄື: ໄຊປາວໜີງແລະໂນຢຽນຈ້ຽນທີ່ມາແຕ່ແຂວງກວາງຊີຈີນ, ພວກເພິ່ນເຄີຍໄດ້ສອນຢູ່ໂຮງຮຽນຫຼັງນີ້ມາຫຼາຍປີ. ພາຍໃຕ້ການສະໜັບສະໜູນອູ້ມຊູຈາກລັດຖະບານຈີນ, ໂຮງຮຽນແຫຼວຕູ້ມີນັກຮຽນຮຽນຈົບຊັ້ນ 30 ຄົນໄດ້ໄປຮຽນຕໍ່ຢູ່ມະຫາວິທະຍາໄລພາຍໃນປະເທດຈີນ.


ນັກຮຽນຖ່າຍຮູບກັບຄູສອນໄວ້ເປັນທີ່ລະນຶກ 学生与老师留影



ນັກຮຽນຈົບຊັ້ນມອບຂອງທີ່ລະນຶກແກ່ໂຮງຮຽນມາດາ 毕业生为母校捐赠纪念品



ປະຕູໂຮງຮຽນ 学校校门

# ສິລະປະ "ຂອບຂ້າງ" ທີ່ມີສະເໜທາຍປາງປຣມລົ້ນ




ລົດປະດັບແຫ່ຂະບວນຢ່າງຄຶກຄື້ນທີ່ຈັດຂຶ້ນຢູ່ເມືອງເອດິງບອກ 在爱丁堡举办的盛大花车巡游 新华社图

## 魅力无限的“边缘”艺术

在苏格兰首府爱丁堡举行的国际艺术节中，人们会看到身着 19 世纪维多利亚时代服装的绅士淑女、化装成骷髅魔鬼的黑衣人，或是一群卧倒在地的行为艺术家。这就是闻名于世的爱丁堡国际艺术节中最有趣的一部分—— “边缘” 艺术节。

ໃນງານມະຫະກຳສິລະປະສາກົນທີ່ຈັດຂຶ້ນຢູ່ເອດິງບອກ(Edingburgh)ເມືອງເອກຂອງສະກັອດແລນນັ້ນ ຄົນທັງຫຼາຍຈະເຫັນສຸພາບບຸລຸດສະຕີທີ່ຕົກແຕ່ງເສື້ອຜ້າອາພອນສະໄໝVictoria ສະຕະວັດທີ 19 ,ຜູ້ສວມເສື້ອດຳແຕ່ງຕົວເປັນຜີໂຄງຮ່າງກະດູກຫຼືໝູ່ນັກສິລະປິນທີ່ນອນຫງາຍຢູ່ກາງຖະໜົນ.ນີ້ແຫຼະຄືງານສິລະປະ "ຂອບຂ້າງ "(Frontier “art” )ທີ່ເປັນພາກສ່ວນໜຶ່ງນ່ອນ ໆໃນງານມະຫະກຳສິລະປະສາກົນເອດິງບອກທີ່ລືນາມໃນໂລກ.

ການກຳເນີດຂອງ "ງານສິລະປະຂອບຂ້າງ "ເປັນສິ່ງບັງເອີນອ້ອຍຕ້ອຍ.ໃນລະຫວ່າງງານມະຫະກຳສິລະປະເອດິງບອກສະໄໝປະຖົມມະເລີກ,ມີຄະນະສະແດງ 8 ຄະນະໄດ້ມາສະແດງຕົນຢູ່ນອກວົງຮອບງານມະຫະກຳສິລະປະໂດຍບໍ່ໄດ້ຮັບຄຳເຊີນ.ຈາກນັ້ນ "ງານສິລະປະຂອບຂ້າງ "ກໍ່ກຳເນີດເກີດມີຂຶ້ນແລະໄດ້ຄ່ອຍຄ່ອຍກາຍເປັນງານສິລະປະບໍ່ເປັນກະແສຫຼັກທີ່ມີຂະໜາດໃຫຍ່ກວ່າໝູ່ໃນໂລກ.ນັກສິລະປິນທີ່ຈາກແຫ່ງຕ່າງ ໆໃນໂລກມາເຕົ້າໂຮມກັນທີ່ເອດິງບອກ,ໄດ້ສະແດງທັກສະສິລະປະປະເພດຕ່າງໆອັນມີກາຍະສິນ,ວິທະຍາກົນ,ລະຄອນກ້ອມແລະຮ້ອງເພງລວມໝູ່ເປັນຕົ້ນ.

ສຳລັບ "ງານສິລະປະຂອບຂ້າງ "ນີ້ບໍ່ໄດ້ມີການຈຳກັດຜູ້ສະໝັກເຂົ້າຮ່ວມແຕ່ປະການໃດ,ຍູທ່າງສະແດງເນື້ອໃນຄວາມໝາຍສິລະປະຢ່າງເສລີຊັດແຈ້ງ.ຊ່ວງປີ 2005 ,ມີຜູ້ສະແດງ 16 ພັນຄົນໄດ້ຮ່ວມການສະແດງສິລະປະຂອບຂ້າງເກືອບ 27 ພັນຮອບຢູ່ສະໜາມແລະຫໍໂຮງຕ່າງ ໆ 300 ແຫ່ງ.ປີນີ້ຜົດມີລາຍການທີ່ມີເນື້ອໃນອຸດົມສົມບູນຫຼາຍຫຼາກນຳອອກສະແດງເກືອບ 2000 ຮອບ,ສຳຄັນແຍກເປັນ 5 ປະເພດ ເຊັ່ນ:ລະຄອນຕະຫຼົກ,ນາຕະກຳ,ດົນຕີ,ອາດຟ້ອນແລະນາຕະກຳດົນຕີລະຄອນເພງເປັນຕົ້ນ.

ລາຍການຂອງ "ງານສິລະປະຂອບຂ້າງ "ຊ່າລືຄືສະທ້ອນພາບໄອພະລັນ,ການສະແດງກ່ຽວກັບການປະທະກັນຕ່າງ ໆ ທາງດ້ານການເມືອງ,ການທະຫານ,ສາສະໜາຫຼືວັດທະນະທຳໃນໂລກປະຈຸບັນ ກໍ່ໄດ້ສະທ້ອນພາບອອກທັງສິ້ນ,ມັນເປັນບາຫຼອດຂອງການປ່ຽນແປງສັງຄົມ.ລະຄອນຕະຫຼົກທີ່ຊື່ວ່າ《ພວກເຮົາດົມກິ່ນປາກຄ້າຍຄືອາເມລິກາ》ຊຶ່ງເປັນລະຄອນເຍາະເຍີ້ຍວິຖີດຳລົງຊີວິດຂອງອາເມລິກາແລະການເມືອງມະຫາອຳນາດ;ລະຄອນສັ້ນຊື່ວ່າ:《ຫວ່ງຽງຫູຟັງAlbert einstein》ເປັນເລື່ອງທີ່ຍົກເອົາທ່ານ ນັກວິທະຍາສາດພອນສະຫວັນຂຶ້ນສູ່ເວທີລະຄອນ... ນັກສະແດງໄດ້ນຳເອົາການສະແດງທີ່ຕະຫຼົກຂົບຂັນແລະທັກສະສີມືອັນພິດສະດານປະສານກັບສຽງຫົວແລະຕົບມືບໍ່ຂາດພາຍໃນຫໍໂຮງຢ່າງອຶກກະທຶກນຶກນອງ.












ຕ້ອງການຂໍ້ມູນລະອຽດ ເຊີນຕິດຕໍ່: ບໍລິສັດທ່ອງທ່ຽວ ຈຳປາລາວ

For more information, Please contact CHAMPA LAO TRAVEL

TEL:(856.21).216616. FAX:(++856.21)215260.

# ຈຳປາລາວ





ເຊີນທ່ານ ທ່ອງທ່ຽວ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.
ດິນແດນທີ່ສວຍງາມ ດ້ວຍທຳມະຊາດ, ອຸດົມຮັ່ງມີທາງ ດ້ານປະຫວັດສາດ,
ວັດທະນະທຳ ແລະຫລາຍຊົນຊາດ ຊົນເຜົ່າ,
ເປັນຕົ້ນ: ນະຄອນຫລວງວຽງຈັນ-ເມືອງມໍລະດົກໂລກຫລວງພະບາງ-
ວັດພູຈຳປາສັກ-ທົ່ງໄຫຫີນ-ນ້ຳຕົກຄອນພະເພັງ-ຫລີ່ຜີ ແລະອື່ນໆ.



主要有：
首都万象市
世界文化遗产——
琅勃拉邦
占芭色瓦普寺
查尔平原（石缸平原）
宽帕盆大瀑布
里皮等名胜古迹

*Visit Laos P,D,R, one of the premier holiday destination, with its sunny, the beautiful nature, the rivers and the warm smiles of the local people, Rich tradition and culture and many ethnic groups. Visit Vientiane, the capitale, LuangPrabang, wat Phou temple, the plain of Jars: The world heritage sites and the big water falls KhonPhaPheng, LiPhi etc... Contact us today and you will be welcome.*

文 / 图：胡小平

# ພູເຂົາໂລຈີແດນສະຫວັນເມືອງຄົນ



## 人间仙境螺髻山

螺髻山位于中国四川省西昌市城南 30 公里处，总面积 2400 平方公里，其中主要景区面积 1083 平方公里。大自然用其独特的神力将螺髻山雕琢得神姿仙态、妖娆迷人。其壮观秀丽的螺髻山因状若层层叠叠的金字塔、形似倒置的青螺、貌如古代少女的发髻而得其美名。

ພູເຂົາໂລຈີຕັ້ງຢູ່ບ່ອນຫ່າງຈາກຕົວເມືອງຊີຊາງແຂວງເສຊວນໄປທິດໃຕ້ 30 ກິໂລແມັດໃນເມືອງຈີນ,ມີເນື້ອທີ່ກວມລວມ 2400 ກິໂລແມັດມົນທົນ,ໃນນັ້ນເຂດທ່ອງທ່ຽວທັດສຳຄັນນັ້ນມີເນື້ອທີ່ 1083 ກິໂລແມັດມົນທົນ.ພູເຂົາໂລຈີພາສາຊົນເຜົ່າຢີ່ຮຽກວ່າ "ອານຣາໂປ",ແປວ່າຈອມພູ 500 ລີ້ແລະຈອມພູ 5 ວ່ານ,ຕັ້ງຊ້ອງຊໍ່ສະຫງ່າຜ່າເຜີຍ.ຈອມຫຼັກສູງຮອດ 4359 ແມັດ,ມັນ







ຕັ້ງຕະຫງ່ານສູງພົ້ນເດັ່ນຄໍ້າຟ້າ, ທໍາມະຊາດເກີດເປັນສ້າງສັນພູເຂົາໂລຈີປຽບເໝືອນແດນສະຫວັນຊວນໃຈຫຼົງໄຫຼ. ຄວາມງາມຂອງພູເຂົາໂລຈີມີທາດຈອຍລ່ຽມ (ພະທາດເຈດີ) ສະຫຼັບຊັບຊ້ອນຕັ້ງຊ້ອງຊໍ່ຄືຫອຍສັງແລະກໍ່ຄືເກົ້າຜົມນາງສາວບູຮານ, ຄໍາວ່າ "ໂລຈີ" ກໍ່ໝາຍວ່າ "ເກົ້າຜົມກົ້ນຫອຍ" ນັ້ນເອງ. ສະນັ້ນພູເຂົາໂລຈີ ກໍ່ມີຄວາມໝາຍວ່າ "ພູເຂົາເກົ້າຜົມກົ້ນຫອຍ" ຊຶ່ງເປັນຊື່ງາມນາມຄ່ອງຂອງພູເຂົາດັ່ງກ່າວ.

ໃນທາງປະຫວັດສາດ, ພູເຂົາໂລຈີເຄີຍເປັນສະຖານທີ່ສັກກາລະບູຊາຝ່າຍພຸດທະສາສະໜາຂອງຈີນມາແຕ່ໃດ ໆ, ຄາວພຸດທະກິດນິຍົມເຜີຍແຜ່ກັນຢ່າງກວ້າງຂວາງໃນສະໄໝລາຊະວົງຖັງ, ພຽງແຕ່ວັດໂລຈີກໍ່ມີພະສົງສາມະເນນຮອດ 3000 ອົງ. ພູເຂົາໂລຈີມີຮ່ອມຫ້ວຍງຽບສະຫງັດແລະມີສາຍນໍ້າໄຫຼໃສເຢັນ,



ກົບເຝື້ອເລື່ອນລອຍເປັນມັບມຽງ,ຊາວພຸດຖືເປັນ "ແດນສະຫວັນ"ທີ່ເຝິກຈິດຫັດກາຍບົ່ມນິດໄສ.

ໃນປື້ມບູຮານຈີນໄດ້ສະຫລຸບສະຖານທີ່ອັດສະຈັນຂອງພູເຂົາໂລຈີໄວ້ວ່າ:ມີຄູຫາພຸດທະເຈົ້າ 12 ແຫ່ງ,ມີຍອດ 18 ຍອດ,ມີເດີ່ນ 25 ເດີ່ນ,ມີໜອງຟ້າ 32 ໜອງ,ມີຈອມພູ 72 ຈອມ,ພາບທິວທັດ 100 ປາຍແຫ່ງພຽບພ້ອມໄປດ້ວຍພູມພາບບໍ່ນ້ຳຮ້ອນແລະນ້ຳຕົກຕາດທີ່ສວຍສົດງົດງາມໜ້າອັດສະຈັນ.

ກຸ່ມພູອ້ອມຮອບບໍລິເວນພູເຂົາໂລຈີ ສະຫຼັບຊັບຊ້ອນກວ້າງຂວາງຜ່າເຜີຍ;ມີຮ່ອມຫ້ວຍເຫວເລິກ,ກົກໄມ້ເຖົ້າຕົ້ນໃຫຍ່ລຳສູງທຽມຟ້າ,ປ່າໄຜ່ຂຽວງາມດົກໜາແລະດອກໄມ້ປ່າງາມສະຫງ່າ.ພູເຂົາລຳເນົາແຫ່ງດັ່ງກ່າວມີປ່າດ້າວດົງໜາດຶກດຳບັນອັນກວ້າງໃຫຍ່ໄພສານ,ທົ່ງຫຍ້າກວ້າງຂຽວອຸ່ມທຸ່ມພຽບພ້ອມດ້ວຍສັດປ່ານາ ໆຊະນິດທີ່ຫາຍາກກໍ່ຍັງສະຫງວນຮັກສາໄວ້ເປັນຢ່າງດີແລະຄົບຖ້ວນ,ເຮັດໃຫ້ພູເຂົາໂລຈີກາຍເປັນບູຮານສະຖານທິວທັດສວຍງາມ.

ພູເຂົາໂລຈີເປັນຫໍພິພິທະພັນທຳມະຊາດຫ້ວຍນ້ຳແຂງບູຮານສະໄໝ Quaternary ທີ່ຮັກສາໄວ້ຢ່າງຄົບຖ້ວນຫາຍາກໃນພື້ນທີ່ພູເຂົາຂອງຈີນ.ມັນປະກອບເປັນພາບຫ້ວຍນ້ຳແຂງບູຮານທີ່ມີຮ່ອງຮອຍຈອມລ່ຽມ,ສັນຄົມ,ໂຕ່ງນ້ຳແຂງ,ເຫວເລິກ,ໂໜ້ງນ້ຳແຂງເຊາະຫ້ຽນ,ໜອງທາດຊາຍທີ່ນ້ຳແຂງເຊາະລ້າງແລະຮ່ອງເຊາະຖູຈາກຫ້ວຍນ້ຳແຂງທີ່ຕົກຄ້າງມາຊຶ່ງມີຄຸນຄ່າຢ່າງສູງສຳລັບການທ່ອງທ່ຽວ,ຜະຈົນໄພແລະທຳການສຳຫຼວດທາງວິທະຍາສາດ.ໃນນັ້ນໜອງທາດຊາຍນ້ຳແຂງເຊາະລ້າງສະຫງ່າງາມກວ່າໝູ່,ໜອງດັ່ງກ່າວໃນພູເຂົາໂລຈີຢັ່ງປາຍຢູ່ຄວາມສູງຈາກລະດັບນ້ຳທະເລ 3650ແມັດຂຶ້ນໄປ.ໃນບໍລິເວນບັນດາໜອງນ້ຳຍັງຮັກສາປາກົດການນ້ຳແຂງເຊາະຫ້ຽນຢ່າງຫຼວງຫຼາຍແລະວັດຖຸຕະກອນນ້ຳແຂງຕ່າງ ໆ.ເນື່ອງຈາກສີຫີນພື້ນ,ນ້ຳໃນໜອງ,ພົມພືດຫຼືວັດຖຸດິນພົກບໍລິເວນໜອງຕະຫຼອດຮອດພືດໃນນ້ຳກາງໜອງປະກົດສີຕ່າງ ໆດັ່ງສີຟ້າ,ສີດິນຈໍ,ສີນ້ຳຕານອົມເຫຼືອງ,ສີຂຽວໝົ່ນແລະສີຂຽວເຂັ້ມເປັນຕົ້ນ.

ພູມສັນຖານພູເຂົາໂລຈີສູງຕະຫງ່ານ,ພູມອາກາດແບ່ງເຂດ



ລະດູຢ່າງຈະແຈ້ງ, ແຕ່ກ່ອນຍ້ອນວ່າມັນເປັນບ່ອນທີ່ຜີບໍ່ທ່ອງ ຄົນບໍ່ຫຼອວ, ສະພາບແວດລ້ອມພູມສາດອັດຕັນເປັນເອກະລັກ, ມີປ່າຕຶບດົງໜາແລະສັດຫາຍາກຊະນິດຕ່າງ ໆ, ພ້ອມດ້ວຍດອກ ໄມ້ປ່າແລະຈຳພວກເຫັດມາກມາຍຫຼາຍຊະນິດ. ເນື້ອທີ່ປ່າໄມ້ ດຶກດຳບັນມີຮອດ 3 ແສນປາຍມູ(3 ໝື່ນເຮັກຕາ), ຊະນິດພືກ ສາຊາດມີທັງພືມພືດເຂດຮ້ອນອາຊີໃຕ້, ປ່າໄມ້ໃບຮູບເຂັມເຄິ່ງ ເຂດຮ້ອນ, ປ່າໄມ້ດົບເຄິ່ງເຂດຮ້ອນແລະປ່າໄມ້ໃບຮູບເຂັມເຄິ່ງ ພູສູງລວມມີ180ກວ່າຕະກູນ, ແນວພັນ 2000 ປາຍ. ທາງດ້ານ ເຊື້ອເຫັດຕາມທີ່ໄດ້ຄົ້ນພົບກໍໄດ້ມີເຖິງ 150 ກວ່າຊະນິດປະ ເພດຂະໜາດໃຫຍ່, ມີ 80% ຂຶ້ນເມືອສາມາດບໍລິໂພກແລະເຮັດ ຢາໄດ້. ມີສັດຊັ້ນສູງເກືອບ 400 ຊະນິດ. ຍ້ອນວ່າພູເຂົາໂລຈີໄດ້ ຮັກສາຊັບພະຍາກອນສັດກັບພືດໄວ້ຢ່າງອຸດົມສົມບູນຈຶ່ງກາຍ ເປັນ "ທະນາຄານຢີນ" (ທະນາຄານເມັດສີສົມ) ແຫ່ງຊັບພະຍາ ກອນຊີວະນາ ໆພັນທີ່ຫາຍາກໃນປະເທດຈີນ, ມີຄຸນຄ່າໜ້າຊົມ ເບິ່ງຢ່າງສູງ, ທັງເປັນພື້ນຖານສຳລັບສຳຫຼວດຄົ້ນຄວ້າທາງວິ ທະຍາສາດທີ່ສຳຄັນແຫ່ງໜຶ່ງ.







# ສວນສາທາລະນະໄຮເກິງທີ່ສວຍງາມ

## 美丽的海埂公园

昆明海埂公园，坐落在云南省昆明市的南郊的滇池湖畔，置身在美丽的海埂公园，你会感受到高原明珠滇池温馨迷人的风采，也会情不自禁地赞叹滇池的秀美与壮丽。

ສວນໄຮເກິງຄຸນໝິງຕັ້ງຢູ່ແຄມໜອງຕ້ຽນສື(ໜອງແສ)ຊານເມືອງເບື້ອງໃຕ້ຂອງນະຄອນຄຸນໝິງແຂວງຢູນນານ,ຫ່າງໄກຈາກໃຈກາງໂຕເມືອງຄຸນໝິງປະມານ 10 ກິໂລແມັດ,ການຄົມມາຄົມສັນຈອນໄປມາກໍ່ສະດວກສະບາຍທີ່ສຸດ.

ສວນໄຮເກິງກວມເນື້ອທີ່ຕາດິນ 750 ມູ(50 ເຮັກຕາ),ມີເຂື່ອນຍາວ 2.5 ກິໂລແມັດປະກອບເປັນ"ຫາດລຳທະເລ"ພູມພາບພູພຽງທີ່ຫາໄດ້ຍາກ.ເບື້ອງໃຕ້ຂອງສວນສາທາລະນະຕິດກັບໜອງຕ້ຽນສື່ທີ່ມີຟອງຟາດຝັ່ງ,ມອງໄປໄກ ໆ,ເຫັນແຕ່ສີມົວມົວ,ມີເຮືອໃບເປັນຈຸດ ໆເລື່ອນລອຍຕາມໜ້າໜອງ.ເບື້ອງຕາເວັນຕົກມີໜອງນ້ຳຂວາງຂັ້ນກັບພູຊີຊານທີ່ລືນາມ,ມີສາຍລວດອູ່ໄຟຟ້າເຊື່ອມຕໍ່ສວນສາທາລະນະກັບປະຕູລວງຊີຊານທັງສອງແຫ່ງເປັນອັນໜຶ່ງອັນດຽວກັນ.ເບື້ອງຕາເວັນອອກແປະກັບສະຖານທີ່ເຝິກແອບກິລາແຫ່ງຊາດຈີນ;ເບື້ອງເໜືອຢູ່ໃກ້ຄຽງຮຽງ








ຂ້າງໝູ່ບ້ານຊົນເຜົ່າຢູນນານ.

ສວນໄຮເກິງເປັນບ່ອນພັກຜ່ອນຢ່ອນກາຍໃນມື້ພັກລາການດີທີ່ສຸດ. ໃນສວນມີແຖວຕົ້ນໄມ້ຂຽວງາມຮົ່ມເຢັນ, ສະພາບແວດລ້ອມສົດຊື່ນແລະງຽບສະຫງັດ. ມີທໍ່ຮູບແຕ້ມ, ເຮືອທີ່ນອ່ອນ, ລະບຽງຍາວສຳລັບຊົມໜອງ, ສະໜາມຫຍ້າທີ່ຂຽວຍິ່ງ ໆ, ພຸ່ມຕົ້ນດອກຊາກຸລະແສນງາມແລະສະໜາມຫຼວງພັກຕາກອາກາດທີ່ແຄມໜອງ... ເຮັດໃຫ້ສວນໄຮເກິງກາຍເປັນຮູບໄຕມິຕິ, ຊວນໃຫ້ແຂກຄົນພາຍໃນແລະຕ່າງປະເທດມາຢ້ຽມມາຊົມແລ້ວບໍ່ປາກລາຫ່າງໄລໜີ. ໂດຍສະເພາະສິ່ງທີ່ພາໃຫ້ຜູ້ຄົນອາວອນນັ້ນແມ່ນຍາມຕົ້ນລະດູໜາວທຸກປີ, ສວນໄຮເກິງໄດ້ດູດດຶງເອົານົກນາງນວນສິບແດງນັບເປັນພັນ ໆ ໂຕບິນມາແຕ່ຊີເບລີເພື່ອພັກພິງຢູ່ໃນແຫ່ງດັ່ງກ່າວ, ປະກົດມີພາບວິວເອກະລັກສະເພາະ "ຄົນກັບນົກນາງນວນຢອກໄຍກັນ", ຊຶ່ງໄດ້ເສີມຄວາມງາມເປັນຕາອອນຊອນໃຫ້ແກ່ສວນສາທາລະນະຕື່ມອີກ.

ເມື່ອທ່ານຢືນຢູ່ສວນໄຮເກິງ ທ່ານຈະສຳຜັດກັບອາດສີສັນແຫ່ງມຸກດາເຮືອງໃສໃນພູພຽງ, ອາດຈະກ່າວສັນລະເສີນຄວາມສວຍສົດງົດງາມໃນພື້ນທີ່ແຫ່ງນີ້.

# ການຮ່ວມມືແລກປ່ຽນສາກົນຂອງໂຮງຮຽນຊັ້ນສູງຢູນນານມີໝາກຜົນງົດງາມ

## --ນັກສຶກສາມາຮຽນຢູ່ຢູນນານເກືອບ 5 ພັນຄົນ

### 云南高校国际交流合作成果丰硕

——在滇留学生已近五千人

“我喜欢汉语，因为我们国家在文化上与中国有很多共同点，而且在现代社会中，汉语越来越受到人们的重视。” 这是在云南师范大学汉语专业留学 4 年的越南留学生陈氏清心发自内心的感慨。目前像陈氏清心一样在云南学习的留学生已有近 5000 人。近几年，云南省努力提升高等教育国际交流与合作水平，合作办学、交流访问、教育培训、项目合作等多个领域的对外交流正向纵深推进。

"ຂ້ອຍມັກພາສາຈີນ,ເພາະວັດທະນະທຳໃນປະເທດຂອງພວກເຮົາມີຈຸດຄ້າຍຄືກັນຫຼາຍກັບຈີນ,ແລະໃນສັງຄົມສະໄໝນີ້ ພາສາຈີນນັບມື້ນັບຖືກຄົນທັງຫຼາຍນິຍົມສົນໃຈ."ນີ້ເປັນຄຳເວົ້າຂອງນາງເຈິ່ນຖິແທ້ງເຕິມນັກສຶກສາຫວຽດນາມທີ່ມາສຶກສາຂະແໜງວິຊາພາສາຈີນ 4 ປີຢູ່ມະຫາວິທະຍາໄລສ້າງຄູຢູນນານ.ປະຈຸບັນນັກສຶກສາທີ່ມາຮຽນຢູ່ຢູນນານຄື ນາງເຈິ່ນນີ້ ເກືອບຮອດ 5000 ຄົນ.

ກ່ອນນີ້ 4 ປີ,ຈຳນວນນັກສຶກສາທີ່ມາສຶກສາຢູ່ຢູນນານບໍ່ເຖິງ 2000 ຄົນ.ເຈົ້າໜ້າທີ່ຮັບຜິດຊອບພະແນກສຶກສາແຂວງຢູນນານແນະນຳວ່າ:"ດຽວນີ້ນັກສຶກສາທີ່ມາຈາກອັງກິດ,ອາເມລິກາ,ຍີ່ປຸ່ນເປັນຕົ້ນ 10 ກວ່າປະເທດເກືອບ 5000 ຄົນ,ໃນນັ້ນນັກສຶກສາທີ່ມາຈາກປະເທດໃກ້ຄຽງກວມຈຳນວນ 60%ຂຶ້ນໄປ,ສ່ວນນັກສຶກສາຈາກປະເທດໄທ,ຫວຽດນາມ,ມຽນມາແລະອິນເດຍນັ້ນໄດ້ປະກົດທ່ວງທ່າເພີ່ມຂຶ້ນຢ່າງໄວວາ!".ຊຸມປີມໍ່ໆມານີ້ ແຂວງຢູນນານໄດ້ພະຍາຍາມຍົກສູງລະດັບການແລກປ່ຽນແລະຮ່ວມມືສາກົນທາງດ້ານການສຶກສາຊັ້ນສູງ,ການແລກປ່ຽນກັບຕ່າງປະເທດໃນຫຼາຍຂົງເຂດພວມຊຸກດັນກ້າວໄປສູ່ລວງເລິກເປັນຕົ້ນຄື:ການຮ່ວມມືຕັ້ງໂຮງຮຽນ,ການຢ້ຽມຢາມແລກປ່ຽນ,ການສຶກສາເຝິກອົບຮົມແລະໂຄງການຮ່ວມມື.ເພື່ອອົບຮົມບົ່ມສ້າງບຸກຄະລາກອນພອນສະຫວັນຮ່ວມມືເຂດການຄ້າເສລີຈີນ-ອາຊຽນແລະອະນຸພາກພື້ນແມ່ນ້ຳລ້ານຊ້າງ--ແມ່ນ້ຳຂອງ,ຢູນນານໄດ້ຕັ້ງທຶນການສຶກສາຂອງຄະນະປົກຄອງແຂວງຢູນນານໃຫ້ແກ່ນັກສຶກສາປະເທດອ້ອມຂ້າງ.ນັກສຶກສາທີ່ມາຮຽນໄດ້ຮັບທຶນການສຶກສານັ້ນ ນັບທັງວຸດທິການສຶກສາປະລິນຍາເອກປະລິນຍາໂທແລະປະລິນຍາຕີຝ່າຍການສຶກສາຕະຫຼອດຮອດນັກສຶກສາຮຽນບຳລຸງພາສາຈີນຜູ້ໄຮ້ວຸດທິການສຶກສາ,ນັກສຶກສາຮຽນບຳລຸງວິຊາສະເພາະພ້ອມດ້ວຍນັກປາດຄົ້ນຄວ້າ.ກຳນົດທຶນການ



ສຶກສາປີລະ 1.80 ລ້ານຢວນເປັນຊົ່ວຄາວ,ຮັບເອົານັກຮຽນນັກສຶກສາ 60 ຄົນ,ກ່ອນອື່ນຫັນໜ້າສູ່ປະເທດຫວຽດນາມ,ໄທ,ລາວ,ມຽນມາແລະກຳປູເຈຍ.

ໂດຍຕອບສະໜອງຄວາມຮຽກຮ້ອງຕ້ອງການບຸກຄະລາກອນພາສາຈີນຂອງປະເທດອ້ອມຂ້າງ,ເລີ່ມແຕ່ປີ 2004,ແຂວງຢູນນານກໍ່ໄດ້ຈັດສົ່ງຜູ້ອາສາສະໝັກເປັນຄູສອນພາສາຈີນໄປຕ່າງປະເທດ.ມາຮອດປະຈຸບັນ ນອກຈາກການອົບຮົມບົ່ມສ້າງບຸກຄະລາກອນພາສາຈີນແລ້ວ, ໂຮງຮຽນຊັ້ນສູງເກືອບທົ່ວແຂວງຢູນນານແຕ່ລະແຫ່ງກໍ່ມີການແລກປ່ຽນແລະຮ່ວມມືກັນລະຫວ່າງໂຮງຮຽນຕ່າງປະເທດດ້ວຍວິທີແຕກຕ່າງກັນ.ມະຫາວິທະຍາໄລຢູນນານໄດ້ຮ່ວມມືກັບມະຫາວິທະຍາໄລລາຊະຊຸກຸນານສົງຂລາປະເທດໄທຕັ້ງສູນວັດທະນະທຳພາສາຈີນ;ມະຫາວິທະຍາໄລຢູນນານກັບມະຫາວິທະຍາໄລພາກເໜືອແລະໃຕ້ບັງກະລາເດັດ,ມະຫາວິທະຍາໄລຊົນເຜົ່າຢູນນານກັບມະຫາວິທະຍາໄລສີລັງກາຮ່ວມມືກັນສ້າງຕັ້ງວິທະຍາຄານຂົງຈື້;ມະຫາວິທະຍາໄລເສດຖະກິດການເງິນຢູນນານກັບວິທະຍາຄານເສດຖະສາດຢ່າງກຸ້ງມຽນມາຮ່ວມກັນຕັ້ງສູນພາສາຈີນພານິດ;ວິທະຍາໄລຫຼອມໂລຫະຊັ້ນສູງຄຸນໝິງກັບມະຫາວິທະຍາໄລຈຳປາສັກເມືອງລາວທຳການແລກປ່ຽນບຸກຄະລາກອນ.ພາກເໜືອປະເທດໄທໄດ້ກາຍເປັນພື້ນຖານເຝິກພາກປະຕິບັດສຳລັບນັກຮຽນວິຊາຊີບທີ່ມີສ່ວນກ່ຽວຂ້ອງຂອງວິທະຍາຄານສ້າງຄູຢຸຊີ.ປີ 2000 ຫາປີ 2005,ໂຮງຮຽນຊັ້ນສູງທົ່ວແຂວງຢູນນານໄດ້ເຊື້ອເຊີນນັກຊ່ຽວຊານວັດທະນະທຳການສຶກສາຕ່າງປະເທດມາດຳລົງຕຳແໜ່ງ 1400 ເທື່ອຄົນ.ຊ່ວງ 5 ປີມານີ້ ມີ 12ທ່ານໄດ້ຮັບຮາງວັນມິດຕະພາບຜູ້ຊ່ຽວຊານຕ່າງປະເທດລະດັບຊາດ,28 ທ່ານໄດ້ຮັບຮາງວັນເມກສີສັນຜູ້ຊ່ຽວຊານຕ່າງປະເທດຂອງລະນະປົກຄອງແຂວງຢູນນານ.

ສິ່ງທີ່ໜ້າຊົມຊື່ນນັ້ນກໍ່ຄື,ມາຮອດທ້າຍປີ 2005,ອົງກອນຮ່ວມມືຕັ້ງໂຮງຮຽນລະຫວ່າງຈີນກັບຕ່າງປະເທດແລະໂຄງການຂອງໂຮງຮຽນຊັ້ນສູງຢູນນານທີ່ໄດ້ຜ່ານອະນຸມັດນັ້ນມີຮອດ 14 ລາຍແລ້ວ,ການຮ່ວມມືສ້າງຕັ້ງໂຮງຮຽນລະຫວ່າງຈີນກັບຕ່າງປະເທດດ້ວຍຮູບການອື່ນໆນັ້ນມີຮອດ 37 ລາຍ. ໂຄງການຮ່ວມມືຕັ້ງໂຮງຮຽນທີ່ມີລະດັບຂັ້ນນັກສຶກສາຄົ້ນຄວ້າປະລິນຍາໂທລະຫວ່າງມະຫາວິທະຍາໄລສ້າງຄູຢູນນານກັບມະຫາວິທະຍາໄລລະເຊົາເປີອົດສະຕຣາລີນັ້ນ ໄດ້ບົ່ມສ້າງບຸກຄະລາກອນວິທະຍາສາດການສິດສອນພາສາອັງກິດລະດັບຂັ້ນສູງໃຫ້ແກ່ຢູນນານຈຳນວນໜຶ່ງ.ມະຫາວິທະຍາໄລກະສິກຳຢູນນານກັບມະຫາວິທະຍາໄລ 10 ກວ່າແຫ່ງໃນປະເທດອ້ອມຂ້າງແລະອົງກອນວິທະຍາສາດໄດ້ດຳເນີນໂຄງການຮ່ວມມືທີ່ມີລັກສະນະແທດຈິງ, ໂດຍຮ່ວມມືກັບອິນເດຍ,ໄທແລະຫວຽດນາມຮ້ອງຂໍຕໍ່ກົມອະນຸຮັກພືກສາຊາດພາກພື້ນອາຊີຂອງອົງການ FAO (ອາຫານແລະການກະເສດ)ສະຫະປະຊາຊາດ ປະສົມກັບດຳເນີນການຮ່ວມມືຄົ້ນຄວ້າ "ລະບົບຂໍ້ມູນຂ່າວສານໄພສັດຕູພືດພົນລະປູກອາຊີອາຄະເນ";ຮ່ວມມືກັບສະຖາບັນເຂົ້ານາຟີລິບປິນ,ຮ້ອງຂໍໂຄງການ "ຄວບຄຸມໄພສັດຕູພືດເຂົ້ານາຢ່າງຍືນຍົງ"ຕໍ່ທະນາຄານພັດທະນາອາຊີປະສົບຜົນສຳເລັດ.





# 東北美食城

——良心品质　货真价实

东北酒楼主要经营正宗东北特色菜及川菜、粤菜。主要有东北乱炖、北京烤鸭、红烧土鸡煲、烤羊腿、甲鱼煲等等……

延续一种味道，传递一份美爱，您的满意是我们的目标，欢迎各界朋友光临。另，如持有本店广告的顾客可享受15%优惠！














地址：萬象市朗古拉邦路,喔喏太酒店北走600米左右
電話：020 5668772

N.K·工作室

老挝 偶遇的风情美食

洪盛酒楼

## 优雅舒适　遐思无限

酒楼大厅设有6个台位，分有6个豪华包间，可同时容纳200多人，环境优雅华丽，尊贵典雅，宾至如归的感觉油然而生，宽敞的大厅令人耳目一新；包间的沙发柔软而富有弹性，结合暖色的灯光，让人感到无比温馨，整体的配置豪华而不落俗，古朴的纹风结合现代的经典，给人一种无上的尊贵气息、至高的享受，尊典的环境配上富有内涵的菜肴，那真是人间的天堂，难怪连上帝也想来做客！




















详细地址：万象市南13号公路塞他尼县坡帕闹村
订座电话：021-720288

N.K·工作室



ແມ່ນ້ຳລ້ານຊ້າງ--ແມ່ນ້ຳຂອງທີ່ຖືກຂະໜານນາມວ່າ"ແມ່ນ້ຳດານຸບບົວລະພາ" 被誉为"东方多瑙河"的澜沧江—湄公河

# 4 ມາດຕາການຊ່ວຍຊຸກຍູ້ໜູນການສ້າງຊ່ອງທາງແມ່ນ້ຳລ້ານຊ້າງ--ແມ່ນ້ຳຂອງ

## 四大举措助推澜沧江—湄公河通道建设

"十一五"期间，云南省将联合各方力量积极采取四大举措，把澜—湄航道真正建设成为国际水运大通道。

ຟາຍໃຕ້ການອອກແຮງສະໜັບສະໜູນແລະຊຸກຍູ້ຂອງລັດຖະບານຈີນ,ລາວ,ມຽນມາແລະໄທ 4 ປະເທດ,ແມ່ນ້ຳລ້ານຊ້າງ--ແມ່ນ້ຳຂອງຈະໄດ້ເບີກທາງລຳລຽງຂົນສົ່ງນ້ຳມັນສຳເລັດຮູບເປັນທາງການ,ຈາກທ່າເຮືອຊຽງຮຸ່ງປະເທດຈີນຫາທ່າເຮືອຊຽງແສນປະເທດໄທກໍ່ຈະເບີກທາງຖ້ຽວເຮືອໄວໂດຍສານເປັນປະຈຳ.

ໃນໄລຍະ"ແຜນການ 5 ປີຄັ້ງທີ 11",ແຂວງຢູນນານຈະປະສົມກຳລັງທຸກຝ່າຍຕັ້ງໜ້າໃຊ້ 4 ມາດຕາການສ້າງສາທາງເດີນເຮືອແມ່ນ້ຳລ້ານຊ້າງ--ແມ່ນ້ຳຂອງໃຫ້ກາຍເປັນຊ່ອງທາງໃຫຍ່ຂົນສົ່ງທາງນ້ຳສາກົນຢ່າງແທ້ຈິງ.ປະການໜຶ່ງເອົາທ່າເຮືອຊຽງຮຸ່ງນຳໜ້າ ສ້າງຕັ້ງລະບົບບໍລິການອຸດສາຫະກຳກວດເຮືອ,ຜະລິດແລະສ້ອມແປງເຮືອໂດຍສານແລະບັນທຸກສິນຄ້າ

ບົນແມ່ນ້ຳລຳເຊທີ່ມີເຕັກນິກກ້າວໜ້າພາຍໃນປະເທດເທື່ອລະກ້າວຕາມສາຍແຄມຝັ່ງທ່າເຮືອຊຽງຮຸ້ງ;ປະການສອງແມ່ນສ້າງຕັ້ງພື້ນຖານທີ່ເຝິກອົບຮົມລູກເຮືອສາກົນແມ່ນ້ຳລ້ານຊ້າງ--ແມ່ນ້ຳຂອງແຄມຝັ່ງ 4 ປະເທດຈີນ,ລາວ,ມຽນມາແລະໄທຢູ່ຊຽງຮຸ່ງເພື່ອຍົກສູງລະດັບເຕັກນິກຂອງລູກເຮືອບັນດາປະເທດຊາຍຝັ່ງພ້ອມກັບລະດັບວິຊາຂັບເຮືອດ້ວຍຄວາມປອດໄພກໍ່ມີການຍົກສູງຂຶ້ນຮອບດ້ານ;ປະການສາມພາຍໃຕ້ການອອກແຮງສະໜັບສະໜູນຂອງລັດຖະບານບັນດາປະເທດຊາຍຝັ່ງ,ເລັ່ງລັດຈັດສ້າງລະບົບຄຸ້ມຄອງຮັກສາທາງເດີນເຮືອຕາມຫົວຂອງເພື່ອຮັບປະກັນຊ່ອງທາງໃຫຍ່ໂລ່ງລ່ຽນບໍ່ຂ້ອງຄາ;ປະການສີ່ຈະຕ້ອງສ້າງຕັ້ງລະບົບບໍລິການແລະອົງກອນກູ້ໄພຕາມແມ່ນ້ຳລ້ານຊ້າງ--ແມ່ນ້ຳຂອງໃຫ້ໄວເທົ່າທີ່ຈະໄວໄດ້ ເພື່ອຮັບປະກັນການເດີນເຮືອປອດໄພແລະຮັບມືກັບກໍລະນີບັງເອີນ.



ຫ້ອງເລຂາຄະນະກຳມະການແມ່ນ້ຳຂອງທີ່ຕັ້ງຢູ່ນະຄອນຫຼວງວຽງຈັນ ຖ່າຍພາບ: ຊູເວີນເວີນ
位于老挝万象的湄公河委员会秘书处 苏雯雯 摄

ການເປີດທາງເດີນເຮືອຕາມແມ່ນ້ຳລ້ານຊ້າງ--ແມ່ນ້ຳຂອງ 5 ປີຜ່ານມາ,ສິນຄ້າທີ່ສົ່ງເຂົ້າສົ່ງອອກຕາມທາງເດີນເຮືອດັ່ງກ່າວໄດ້ບັນລຸລ້ານໂຕນ, ໂດຍມີວິສາຫະກິດຂົນສົ່ງທາງເຮືອ 4 ປະເທດຈີນ--ລາວ--ມຽນມາ--ໄທເປັນຕົ້ນຕໍ,ເຮືອໂດຍສານແລະບັນທຸກສິນຄ້າທີ່ລຳລຽງຂົນສົ່ງໄດ້ກາຍຮ້ອຍລຳ.ການຂົນສົ່ງທາງເຮືອລະຫວ່າງຊາດໄດ້ປະກົດທ່ວງທ່າໃໝ່ຂົນສົ່ງມີຄວາມປອດໄພ,ຊະນິດຂົນສົ່ງກໍ່ຫຼາຍຢ່າງຫຼາຍແນວ,ລະດັບເຕັກນິກມູນສ່ວນບັນຈຸວິທະຍາສາດເຕັກນິກເຮືອແພນາວາກໍ່ສູງຂຶ້ນແລະເປັນຂະໜາດໃຫຍ່.



ທ່າເຮືອທີ່ຊຸ້ນຂ້ຽວບົນແມ່ນ້ຳຂອງ 湄公河上繁忙的港口

# ຕະຫຼາດພາຍໃນແລະນອກປະເທດນິຍົມຊົມ




## 国内外市场青睐云南蔬菜

近年来，云南大力发展标准化无公害蔬菜产业，鼓励农民种植蔬菜。目前，已成为中国南菜北运的一大基地，蔬菜销往国内 146 个大中城市和外销至亚洲、欧洲、美洲、大洋洲等五大洲 30 多个国家。



ຊຸມປີມໍ່ ໆມານີ້, ຢູນນານໄດ້ອອກແຮງພັດທະນາອຸດສາຫະກຳພືດຜັກປອດສານພິດແບບມາດຖານ, ສົ່ງເສີມໃຫ້ຊາວກະສິກອນປູກພືດຜັກບໍລິໂພກ. ປະຈຸບັນໄດ້ກາຍເປັນພື້ນຖານແຫ່ງໜຶ່ງທີ່ລຳລຽງພືດຜັກພາກໃຕ້ໄປຍັງພາກເໜືອຂອງປະເທດຈີນ, ພືດຜັກຈຳໜ່າຍຂາຍອອກສູ່ຕົວເມືອງໃຫຍ່ແລະຕົວເມືອງຂະໜາດກາງ 146 ແຫ່ງພາຍໃນປະເທດຕະຫຼອດເຖິງ 30 ກວ່າປະເທດໃນ 5 ທະວີບ (ອາຊີ, ເອີລົບ, ທະວີບອາເມລິກາແລະໂອເຊອານີ), ການຜະລິດພືດຜັກໄດ້ກາຍເປັນຜະລິດຕະພັນທ່າແຮງຕົ້ນຕໍຂອງຜະລິດຕະພັນກະສິກຳຢູນນານ.

ພືດຜັກຢູນນານນອນຢູ່ທ່າດີຂອງພູມອາກາດ ພຽບພ້ອມລະດູການທີ່ເໝາະດີ, ເດີນເສັ້ນທາງທຸລະກິດແບບອຸດສາຫະກຳທີ່ຫຼາຍຮູບການ, ປັບປຸງໂຄງປະກອບໃຫ້ດີເລີດຢູ່ສະເໝີ, ຂະຫຍາຍຕົວ

# ຊອບພືດຜັກຢູນນານ



ຄວບຄູ່ກັບພືດຜັກງວດໃຫຍ່,ພືດຜັກເຄື່ອງເທດ,ພືດຜັກສີສັນພິເສດແລະຜັກປ່າທຳມະຊາດ,ເພື່ອປ້ອນຕະຫຼາດຜັກນາງອາງຫຍ້າຕະຫຼອດປີ,ຮັບປະກັນລະດູຈຶດ(ຫຼືລະດູຂາດແຄນ)ກໍ່ບໍ່ອຶດ.

ໄປຄຽງຄູ່ກັບການປະຕິຮູບວິທີການປູກຝັງ,ຢູນນານໄດ້ເຜີຍແຜ່ການເຮັດສວນເພາະປູກແບບມາດຖານດ້ວຍເຕັກນິກແລະອຸປະກອນຄົບວົງຈອນ ຫຸ້ມທໍ່ທີ່ກ້າວໜ້າ,ແລະໄດ້ບຸຜ່າຂອດສຳຄັນໃນການປຸງແຕ່ງຮັກສາອາການສົດຂຽວຫຼັງຈາກເກັບກູ້,ເນື້ອທີ່ປູກຝັງຂອງໃບສັ່ງຈອງພືດຜັກ 1.33 ລ້ານປາຍເຮັກຕາ,ຜະລິດຕະພາບ,ຄຸນະພາບ,ກຳລັງແກ້ງແຍ້ງຕະຫຼາດແລະປະສິດທິຜົນກວມລວມຂອງພືດຜັກກໍ່ທະວີສູງຂຶ້ນເປັນການໃຫຍ່.

ພື້ນຖານການຜະລິດພືດຜັກແລະພືດຜັກໃນຕູບຜາມໃຫຍ່ຂອງຢູນນານນັບແຕ່ບໍ່ມີຮອດມີ,ເນື້ອທີ່ປູກຝັງຕັ້ງແຕ່ແຄບ ໆຂະຫຍາຍກ້ວາງອອກ,ຮູບການທຸລະກິດການຜະລິດກະແຈກກະຈາຍແລະແບບກະເສດຂະຫຍາຍເນື້ອທີ່ໃນເມື່ອກ່ອນຫັນເປັນທຸລະກິດແບບກະເສດສຸມໃນປະຈຸບັນ,ວິສາຫະກິດປາຍແຫຼມທີ່ມີການຜະລິດ,ຈຳໜ່າຍຂາຍອອກແລະປຸງແຕ່ງໄດ້ຂະຫຍາຍຕົວເຕີບໃຫຍ່ຢ່າງບໍ່ຢຸດຢັ້ງ,ລະດັບອຸດສາຫະກຳພືດຜັກກໍ່ຍົກສູງຂຶ້ນເປັນກ້າວ ໆ. ໃນປະຈຸບັນນີ້ ພືດຜັກຢູນນານທີ່ສົ່ງອອກສຳຄັນແມ່ນປະເພດເຫັດບໍລິໂພກ,ພືດຜັກໝາກຖົ່ວ,ໝາກເຂືອແລະມັນຝະລັ່ງເປັນຕົ້ນ.






## 东盟积极推进经济一体化进程

第 38 届东盟经济部长会议在吉隆坡举行。会议在结束时发表的一项声明指出，东盟将采取各种有效措施深化和加快本地区经济一体化进程。

# ອາຊຽນຕັ້ງໜ້າຊຸກຍູ້ບາດກ້າວເສດຖະກິດເປັນເອກະພິບດຽວ



ແລະບັນຫາຮ່ວມມືເສດຖະກິດການຄ້າທີ່ໄດ້ທຳການເຈລະຈາກ່ຽວກັບເຂດການຄ້າເສລີກັບປະເທດຄູ່ສົນທະນາກັນ. ກອງປະຊຸມໄດ້ກ່າວເນັ້ນວ່າ: ເພື່ອສ້າງຕັ້ງປະຊາຄົມເສດຖະກິດອາຊຽນຂຶ້ນໂດຍໄວ, ກ່ອນອື່ນອາຊຽນຈະຕ້ອງລົງເລິກແລະເລັ່ງລັດການສ້າງສັນເສດຖະກິດເປັນເອກະພາບດຽວຂອງຕົນ, ສະສົມກຳລັງເສດຖະກິດກວມລວມ, ພ້ອມກັນນັ້ນຍັງຈະຕ້ອງຕັ້ງໜ້າດຳເນີນການຮ່ວມມືເສດຖະກິດການຄ້າກວມລວມກັບຕ່າງປະເທດ, ນຳໃຊ້ການຊ່ວຍເຫຼືອຈາກທຶນຮອນແລະເຕັກນິກພາຍນອກ, ຊຸກຍູ້ບາດກ້າວເສດຖະກິດເປັນເອກະພາບດຽວ.

ການປະຊຸມຕ່າງ ໆຄັ້ງນີ້ແມ່ນດຳເນີນໄປໂດຍປິ່ນອ້ອມກອງປະຊຸມລັດຖະມົນຕີເສດຖະກິດສະໄໝທີ 38. ກ່ອນປະຊຸມລັດຖະມົນຕີເສດຖະກິດອາຊຽນ, ພາກສ່ວນກ່ຽວຂ້ອງຍັງໄດ້ຈັດກອງປະຊຸມຄະນະບໍລິຫານເຂດລົງທຶນອາຊຽນແລະກອງປະຊຸມຄະນະກຳມະການເຂດການຄ້າເສລີ. ເຈົ້ານາຍອາຊຽນເຫັນໂດຍທົ່ວໄປວ່າ: ຕັ້ງແຕ່ປີ 1993 ມາຮອດປະຈຸບັນ, ໃນທາງດ້ານການບັນລຸເສດຖະກິດເປັນເອກະພາບດຽວແລະສ້າງສັນປະຊາຄົມເສດຖະກິດນັ້ນ ອາຊຽນກໍໄດ້ມີການຄືບໜ້າຢ່າງເດັ່ນຊັດ.

ເວລາອັດກອງປະຊຸມລັດຖະມົນຕີເສດຖະກິດອາຊຽນສະໄໝດັ່ງກ່າວໄດ້ປະກາດຖະແຫຼງການວ່າ: ເພື່ອຮັກສາເສດຖະກິດເຕີບໂຕຢືນຍົງໃນພາກພື້ນອາຊຽນ, ຕ້ານຢັບການກະທົບທີ່ອາດຈະມີຂຶ້ນຈາກປັດໄຈບໍ່ມີຜົນດີຕ່າງ ໆ, ອາຊຽນຕ້ອງຜັນຂະຫຍາຍລົງເລິກຢ່າງບໍ່ຢຸດຢັ້ງແລະເລັ່ງລັດບາດກ້າວເສດຖະກິດເປັນເອກະພາບດຽວປະຈຳພາກພື້ນ. ເນື່ອງດ້ວຍເຫດນີ້ ລັດຖະມົນຕີເສດຖະກິດບັນດາປະເທດເຫັນພ້ອມສະໜັບສະໜູນເອົາປີ 2020ເວລາບັນລຸອາຊຽນເປັນເອກະພາບດຽວເລື່ອນມາລ່ວງໜ້າເປັນປີ 2015, ພ້ອມທັງຕົກລົງເອົາຂໍ້ສະເໜີທີ່ມີສ່ວນກ່ຽວຢື່ນຕໍ່ຜູ້ນຳບັນດາປະເທດອາຊຽນເພື່ອກວດສອບ.



ກອງປະຊຸມລັດຖະມົນຕີເສດຖະກິດສະມາຄົມບັນດາປະຊາຊາດອາຊີອາຄະເນສະໄໝທີ 38 ແລະການປະຊຸມພາກສ່ວນກ່ຽວຂ້ອງໄດ້ຈັດຂຶ້ນທີ່ກົວລາລຳເປີ. ກອງປະຊຸມຕ່າງ ໆຄັ້ງນີ້ສຳຄັນໄດ້ກວດສອບບາດກ້າວເສດຖະກິດເປັນເອກະພາບດຽວໃນ 10 ປະເທດສະມາຊິກອາຊຽນ

文：苏雯雯　　图：李吉华

# ຈັດງານສະເໜີໂຄງການລົງທຶນພາກຫໍລະດີຂອງນັກທຸລະກິດຊາວຈີນອາຊຽນຊຸດທີ 4 ແລະເວທີປາໄສນັກທຸລະກິດຊາວຈີນອາຊີ--ປາຊີຟິກຊຸດປະຖົມມະເລີກ



ສະຖານທີ່ງານຖະແຫຼງຂ່າວງານສະເໜີໂຄງການລົງທຶນພາກຫໍລະດີແລະເວທີປາໄສຊຸດປະຖົມມະເລີກດັ່ງກ່າວໃນຫົວຂໍ້
第四届东盟华商投资西南项目推介会暨首届亚太华商论坛新闻发布会现场



ທ່ານຫຼິວຜິງ ຮອງເຈົ້າແຂວງຢູນນານເຊີນຊວນນັກທຸລະກິດຊາວຈີນບັນດາປະເທດມາລົງທຶນຢູ່ຢູນນານ
云南省副省长刘平诚邀各国华商到云南投资

## 第四届东盟华商投资西南项目推介会暨首届亚太华商论坛举行

由中国国务院侨务办公室与云南省政府共同主办的第四届东盟华商投资西南项目推介会暨首届亚太华商论坛在昆明举行。来自新加坡、马来西亚、泰国、美国、加拿大、日本、香港、台湾等 19 个国家和地区的 180 多位侨领和华商代表齐聚云南，共谋合作与发展。

ງານສະເໜີໂຄງການລົງທຶນພາກຫໍລະດີຂອງນັກທຸລະກິດຊາວຈີນອາຊຽນຊຸດທີ 4 ແລະເວທີປາໄສນັກທຸລະກິດຊາວຈີນອາຊີ--ປາຊີຟິກຊຸດປະຖົມມະເລີກໂດຍຫ້ອງການກິດຈະການຊາວຈີນຕ່າງດ້າວຂອງສຳນັກຄະນະລັດຖະບານແລະຄະນະປົກຄອງແຂວງຢູນນານຮ່ວມກັນເປັນເຈົ້າພາບຈັດຂຶ້ນຢູ່ຄຸນໝິງ.ຜັດແຕ່ປີ 2003 ເປັນຕົ້ນມາ,"ງານສະເໜີໂຄງການລົງທຶນພາກຫໍລະດີຂອງນັກທຸລະກິດຊາວຈີນອາຊຽນ"ໄດ້ຈັດຂຶ້ນປະສົບຜົນສຳເລັດມາ 3 ຊຸດແລ້ວ,ປີນີ້ເທື່ອທຳອິດທີ່ເພີ່ມ"ເວທີປາໄສນັກທຸລະກິດຊາວຈີນອາຊີ--ປາຊີຟິກ"ຕື່ມອີກ,ຫົວຂໍ້ການເຄື່ອນໄຫວຄື:"ສົນໃຈຕໍ່ພາກຕາເວັນຕົກຂອງຈີນ,ພ້ອມກັນຄົ້ນຄິດຮ່ວມມືພັດທະນາ".ບັນດາຜູ້ນຳຊາວຈີນພົ້ນທະເລແລະຜູ້ແທນນັກທຸລະກິດຊາວຈີນ 180 ກວ່າທ່ານທີ່ມາຈາກສິງກະໂປ,ມາເລເຊຍ,ໄທ,ອາເມລິກາ,ການາດາ,ຍີ່ປຸ່ນ,ຮົງກົງແລະໄຕ້ຫວັນເປັນຕົ້ນ 19ປະເທດແລະເຂດແຄວ້ນໄດ້ເຕົ້າໂຮມກັນຢູ່ຢູນນານ,ພ້ອມກັນຄົ້ນຄິດຮ່ວມມືພັດທະນາ.

ຈຳນວນຊາວຈີນແລະຊາວຈີນຕ່າງດ້າວຢູ່ໃນປະເທດອາຊຽນຄ່ອນຂ້າງຫຼາຍກວ່າໝູ່.ຜ່ານການບາກບັ່ນສູ້ຊົນມາເຂົາເຈົ້າມີກຳລັງເສດຖະກິດອັນແນ່ນອນ,ທັງໄດ້ປະກອບສ່ວນແກ່ການພັດທະນາເສດຖະກິດຂອງບັນດາປະເທດອາຊຽນແລະປະເທດຈີນ.ຊຸມປີມໍ່ ໆມານີ້,ນັກທຸລະກິດຊາວຈີນເປັນຈຳນວນຫຼວງຫຼາຍໄດ້ກັບມາພັດທະນາຢູ່ຈີນ,ການຈັດງານສະເໜີແລະເວທີປາໄສສອງລາຍນີ້ ຈະເປັນການສະໜອງເວທີພັດທະນາໃຫ້ແກ່ຊາວຈີນແລະຊາວຈີນຕ່າງດ້າວໃນບັນດາປະເທດແລະໃຫ້ນັກທຸລະກິດຊາວຈີນພົ້ນທະເລໄດ້ທຳການແລກປ່ຽນແລະອະພິປາຍກັນຢ່າງກວ້າງຂວາງກ່ຽວກັບບັນຫາທີ່ສົນໃຈນຳກັນ,ຮັບຟັງຄວາມຄິດເຫັນແລະຂໍ້ສະເໜີຂອງນັກທຸລະກິດຊາວຈີນກ່ຽວແກ່ການພັດທະນາເຂດແຄວ້ນຫໍລະດີຈີນ.ໄປຄຽງຄູ່ກັນນັ້ນ ບັນດາເຂດແຂວງພາກຫໍລະດີກໍ່ສາມາດເພິ່ງອາໄສທ່າແຮງແລະກຳລັງແໜ້ນໜາທາງດ້ານທຶນຮອນ,ເຕັກນິກ,ບຸກຄະລາກອນແລະການຄຸ້ມຄອງຂອງນັກທຸລະກິດຊາວຈີນພົ້ນທະເລ,ຜັນຂະຫຍາຍຜົນສະທ້ອນຕໍ່ພາຍນອກຂອງເຂດແຄວ້ນພາກຫໍລະດີຈີນ,ເສີມສ້າງຄວາມເຂົ້າໃຈເຊິ່ງກັນແລະກັນຕື່ມອີກ,ຮ່ວມກັນຄົ້ນຄິດແລະຄືບກ້າວພ້ອມກັນກັບນັກທຸລະກິດຊາວຈີນທີ່ກວ້າງໃຫຍ່ໄພສານ.



ນັກຂ່າວສື່ມວນຊົນສຸມຈຸດໃສ່ງານສະເໜີໂຄງການລົງທຶນພາກຫໍລະດີແລະເວທີປາໄສດັ່ງກ່າວໃນຫົວຂໍ້
媒体记者聚焦第四届东盟华商投资西南项目推介会暨首届亚太华商论坛

ຢູນນານໃນນາມເປັນເຈົ້າພາບ,ເຊື່ອມໂຍງກັບພາກພື້ນທົ່ວແມ່ນ້ຳຈູຈຽງ,ມີທ່າດີທີ່ຕັ້ງທຳມະຊາດກັບອາຊີອາຄະເນແລະອາຊີໃຕ້.ອຸດົມໄປດ້ວຍຊັບພະຍາກອນຊີວະນາ ໆພັນ,ພະລັງງານນ້ຳແລະວັດທະນະທຳທ່ອງທ່ຽວ.ຢູນນານເສີມຂະຫຍາຍທ່າແຮງເຫຼົ່ານີ້ຢ່າງເຕັມປ່ຽມ,ພັດທະນາເສດຖະກິດພິເສດ,ພັດທະນາຊັບສິນເສົາຄ້ຳທັງ 5 ເຊັ່ນ:ບົ່ມເພາະກົກຢາ,ບຸກເບີກຊັບພະຍາກອນຊີວະນາ ໆພັນ,ຊັບສິນວັດທະນະທຳທ່ອງທ່ຽວ,ທຸລະກິດບໍ່ແຮ່ແລະປຸງແຕ່ງຕະຫຼອດຮອດພະລັງໄຟຟ້າ.ໃນບໍ່ເທົ່າໃດປີມານີ້ ພື້ນຖານໂຄງລ່າງທາງຄົມນາຄົມຂອງຢູນນານນັບມື້ນັບປັບປຸງໃຫ້ດີຂຶ້ນ,ການສ້າງສາຕົວເມືອງກັບຊົນນະບົດກໍ່ປາກົດມີໂສມໜ້າໃໝ່ຂຶ້ນອູ່ມື້ອູ່ຍາມ,ມັນໄດ້ມີສັບພະຄຸນແຜ່ລັງສີແລະຊັກຈູງຢ່າງແຂງແຮງຕໍ່ຊົນນະບົດທົ່ວ ໆ ໄປ,ໄດ້ຫລຸດຜ່ອນຕົ້ນທຶນການດຳເນີນທຸລະກິດແລະຫົວງານການລົງທຶນຂອງນັກທຸລະກິດຕ່າງປະເທດຕື່ມອີກ,ການເອົາໃຈໃສ່ຕໍ່ບໍລິຫານງານຕາມກົດໝາຍແລະຍົກປະສິດທິພາບວຽກງານໃຫ້ສູງນັ້ນ ມັນກາຍເປັນພື້ນທີ່ຕິດໃຈຢ່າງເລິກເຊິ່ງຂອງນັກທຸລະກິດຊາວຈີນພົ້ນທະເລມາລົງທຶນພັດທະນາທຸລະກິດ.ແຂວງຢູນນານສຸດທີ່ຊົມເຊີຍຊາວຈີນແລະຊາວຈີນຕ່າງດ້າວມາລົງທຶນລິເລີ່ມເສີມສ້າງທຸລະກິດຢູ່ຢູນນານແລະຮ່ວມກັນຄົ້ນຄິດພັດທະນາ,ພ້ອມນີ້ກໍ່ສົ່ງເສີມໃຫ້ວິສາຫະກິດແຂວງຢູນນານ"ເດີນອອກໄປ"ສູ່ພາຍນອກດຳເນີນການຮ່ວມມືເສດຖະກິດການຄ້າ,ບຸກເບີກຂົງເຂດພັດທະນາໃຫ້ກວ້າງຂວາງ.

## 东盟经济高官商讨自由贸易区建设问题

东盟 10 国高级经济官员在吉隆坡举行会议，讨论东盟自由贸易区建设等问题。

# ລັດຖະກອນເສດຖະກິດຂັ້ນສູງອາຊຽນປຶກສາຫາລືບັນຫາສ້າງສັນເຂດການຄ້າເສລີ



ລັດຖະກອນເສດຖະກິດຂັ້ນສູງຂອງ 10 ປະເທດອາຊຽນໄດ້ຈັດກອງປະຊຸມຢູ່ກົວລາລຳເປີ, ອະພິປາຍບັນຫາສ້າງສັນເຂດການຄ້າເສລີອາຊຽນ.

ໃນລະຫວ່າງການປະຊຸມ, ສຳມະນາກອນໄດ້ທຳການອະພິປາຍບັນຫາກ່ຽວກັບບາດກ້າວຫລຸດຜ່ອນແລະຍົກເວັ້ນພາສີອາຊຽນ, ແຜນການໄລຍະທີສອງທີ່ດັດປັບສັງລວມຂົງເຂດວິຊາອາຊີບ11 ແຫ່ງກ່ອນໝູ່ແລະບາດກ້າວສ້າງສັນ"ກົນໄກປ່ອງດຽວ"ຂອງອາຊຽນເປັນຕົ້ນ, ຍັງຈະຄົ້ນຊອກຫາວຫາຂໍ້ສະເໜີໃໝ່ທີ່ສ້າງຕັ້ງກົນໄກປົກປ້ອງສິດທິຂອງຜູ້ຊົມໃຊ້ໃນອາຊຽນ, ເພື່ອເລັ່ງລັດໃຫ້ບັນລຸການສ້າງສັນເສດຖະກິດອາຊຽນເປັນເອກະພົບດຽວ.

ກອງປະຊຸມຍັງອະພິປາຍບັນຫາເພີ່ມທະວີການຮ່ວມມືເສດຖະກິດລະຫວ່າງອາຊຽນກັບຄູ່ສົນທະນາ, ໃນນັ້ນນັບທັງອະພິປາຍບັນຫາກວດສອບສັນຍາສາຍພົວພັນຄູ່ເສດຖະກິດຮອບດ້ານລະຫວ່າງອາຊຽນ--ຍີ່ປຸ່ນແລະສັນຍາກອບລົງທຶນການຄ້າລະຫວ່າງອາຊຽນ--ອາເມລິກາຕື່ມອີກ.

ລັດຖະມົນຕີອຸດສາຫະກຳແລະການຄ້າສາກົນຂອງມາເລເຊຍກ່າວຄຳປາໄສຢູ່ກົວລາລຳເປີວ່າ:ຕັ້ງແຕ່ເດືອນກັນຍາປີ 2005 ຈັດກອງປະຊຸມລັດຖະມົນຕີເສດຖະກິດອາຊຽນສະໄໝທີ 37 ຢູ່ວຽງຈັນສປປລາວເປັນຕົ້ນມາ, ທາງດ້ານການສ້າງສັນເສດຖະກິດເປັນເອກະພົບດຽວໃນອາຊຽນໄດ້ມີການຄືບໜ້າຢ່າງເພິ່ງພໍໃຈ, ປະເທດສະມາຊິກອາຊຽນໄດ້ເອົາຜະລິດຕະພັນຍິ່ງຫຼາຍກວ່າເກົ້າເຂົ້າສູ່ໃນບາດກ້າວຫລຸດຜ່ອນແລະຍົກເວັ້ນພາສີອາກອນ.

# ງານປະດັບຊ້າງເຜືອກ

圣象装饰 TEL:021-214071








ທ່ານສາມາດສັ່ງເຮັດປະຕູຢາງຫ້ອງນ້ຳແລະປ່ອງຢ້ຽມຢາງ
ໄດ້ທີ່ງານປະດັບຊ້າງເຜືອກ

订做塑料钢门窗

文：李平之



ເທສະການສິ່ງຢາງມີຜູ້ເຖົ້າເຈັຈຽງຮ້ອຍຄົນປີນຂຶ້ນພູເຂົາຮວາງຊານຢ່າງຊື່ນໃຈ　重阳节 浙江百名老人喜登黄山　新华社图

# ເທສະການສິ່ງຢາງວັນຂຶ້ນ 9 ຄ່ຳເດືອນ 9

## 九月九日重阳节

每年金秋送爽，丹桂飘香的农历九月初九，中国民间就要迎来重阳佳节。重阳佳节，寓意深远，中国人对此节历来有着特殊的感情。



ທຸກປີລະດູຮ່ວງໃຣຍວຽນມາເຖິງ, ວັນຂຶ້ນ 9 ຄ່ຳເດືອນ 9ຕາມຈັນທະຄະຕິທີ່ອົບອົ້ວໄປດ້ວຍກິ່ນຫອມຫວນດອກກູ່ຍແດງບານແຍ້ມ, ໃນວາລະດີຖືດັ່ງກ່າວຊາວພື້ນເມືອງຈີນກໍ່ຈະຮັບຕ້ອນເທສະການສົ່ງປາງ(ເທສະການຊ້ຳ 9)ທີ່ວຽນມາເຖິງ.ຄົນບູຮານຖືກັນວ່າເປັນມື້ສົມວັນດີທີ່ຈະຕ້ອງທຳການສະຫຼອງ,ແລະຕັ້ງແຕ່ໃດມາກໍ່ພາກັນງັນເທສະການດັ່ງກ່າວ. ເພາະຈີວ ໆສົ່ງປາງ(ເກົ້າ ໆສົ່ງປາງ)ໃນພາສາຈີນ "ເກົ້າ ໆ"ອອກສຽງຄື "ນານນານຫຼືດົນ ໆ",ແລະເລກ 9 ເປັນຈຳນວນຫົວໜ່ວຍທີ່ໃຫຍ່ສຸດ ຈຶ່ງມີຄວາມໝາຍວ່າຍາວນານແລະອາຍຸຍືນຍາວ,ອີກດ້ານໜຶ່ງລະດູຮ່ວງໃຣຍທັງແມ່ນລະດູການລ້ຳຄ່າທີ່ເກັບກ່ຽວຜົນລະປູກຮອບປີ,ສະນັ້ນເທສະການສົ່ງປາງມີຄວາມໝາຍສຳຄັນແລະເລິກເຊິ່ງ,ຊາວຈີນມີຈິດໃຈອາລົມພິເສດຕໍ່ເທສະການນີ້ຕະຫຼອດມາ.

ການເຄື່ອນໄຫວເທສະການສົ່ງປາງຢູ່ໃນພື້ນເມືອງຈີນອຸດົມຫຼາຍຫຼາກ,ຕາມປົກກະຕິພາກັນອອກໄປທ່ຽວຊົມວິວ,ປີນຂຶ້ນໂນນພູສູງມອງເບິ່ງຟາກຟ້າແດນໄກ,ຊົມດອກເບັນຈະມາດ,ຊຳຕົ້ນຄໍເນລ(Cornel)ທົ່ວທຸກບ່ອນ,ກິນເຂົ້າໜົມສົ່ງປາງແລະດື່ມເຫຼົ້າເບັນຈະມາດເປັນຕົ້ນ.ແຕ່ລະແຫ່ງໃນເມືອງຈີນກໍ່ມີຮີດຄອງປະເພນີງັນເທສະການຂອງໃຜມັນ,ຢູ່ຕາມຊົນນະບົດແຂວງສ່ານຊີ,ເຂົາເຈົ້າງັນເທສະການໂດຍຜ່ານການຊົມໃຊ້ໝາກຜົນເກັບກູ້ອຸດົມສົມບູນ,ເມື່ອກິນເຂົ້າແລງແລ້ວ,ຊຸມຊົນພາກັນປີນຂຶ້ນຈອມດອຍບໍລິເວນ,ດັ່ງກອງໄຟຮຸ່ງພູ່ມຜູ່,ປາກລົມຫົວມ່ວນຈົນເຖິງໄກ່ຂັນກົກຈຶ່ງກັບເຮືອນໃຜເຮືອນມັນ.ເວລາກັບຈາກຈອມພູກໍ່ພາກັນເດັດເອົາດອກເບັນຈະມາດປ່າເມືອທັດໃສ່ເກົ້າຜົມລູກສາວເພື່ອປັດເປົ່າຜີສາງນານຮ້າຍວ່າຊັ້ນ.ຢູ່ເມືອງພູຊຽນແຂວງຟູ້ຈຽນ,ຄົນທັງຫຼາຍພັດສືບຕໍ່ຮີດເກົ່າຄອງເດີມ,ເຮັດເຂົ້າໜົມຜົນໄມ້ສົ່ງປາງ,ເຂົ້າໜົມຊ້ອນກັນ 9 ຊັ້ນ,ມີລົດຫວານອ່ອນແຊບຊ້ອຍບໍ່ຕິດແຂ້ວ,ມັນເປັນຂອງຝາກຂອງຕ້ອນສຳລັບຜູ້ເຖົ້າຜູ້ແກ່ໃນວັນສົ່ງປາງດີທີ່ສຸດ.ຍັງມີມວນຊົນທ້ອງຖິ່ນບາງບ່ອນກໍ່ຖືໂອກາດປີນພູຊົມວິວໃນວັນສົ່ງປາງໄປແຜ້ວກວາດປ່າຊ້າບະບັນພະບຸລຸດ,ລຳລຶກຫາບັນພະຊົນ.ປີ1989,ສປຈີນໄດ້ກຳນົດເອົາເທສະການສົ່ງປາງທຸກປີເປັນວັນຜູ້ເຖົ້າ,ອັນເປັນການປະສານປະສົມກັນລະຫວ່າງມູນເຊື້ອກັບຍຸກສະໄໝຢ່າງກົມກືນ,ເລີຍກາຍເປັນເທສະການຂອງຄົນຜູ້ເຖົ້າທີ່ເຄົາລົບຜູ້ເຖົ້າ,ນັບຖືຜູ້ເຖົ້າ,ຮັກແພງຜູ້ເຖົ້າແລະຊ່ວຍຊູຜູ້ເຖົ້າ.



ນັກຮ້ອງຊື່ດັງ ຢືສຸເຈັນແວ່ຢາມຜູ້ເຖົ້າ 中国著名歌唱家于淑珍看望老人 新华社图



# ການປັກແສ່ວຂອງເຜົ່າຢ້າວ

ແມ່ຍິງເຜົ່າຢ້າວລ້ວນແຕ່ເປັນຊ່າງສີມືເກັ່ງໃນການປັກແສ່ວ, ອະເຈົ້ານິຍົມການປັກແສ່ວທີ່ສຸດ,ເລີ່ມແຕ່ອາຍຸ 7-8 ຂວບ,ຜູ້ເປັນແມ່ກໍ່ສອນອະເຈົ້າແສ່ວດອກ. ອະເຈົ້າບໍ່ວ່າໄປຢາມຍາດຕິພີ່ນ້ອງຫຼືອອກໄປເຮັດວຽກກໍ່ຖືເອົາເສັ້ນໄໝ,ເຂັມແສ່ວແລະແຜ່ນແພໄປນຳ,ວ່າແຕ່ມີເວລາຫວ່າງເປົ່າກໍ່ລົງມືປັກແສ່ວໂລດ. ສາວເຜົ່າຢ້າວເມື່ອເຖິງອາຍຸ 14-15 ປີກໍ່ສາມາດແສ່ວ

## 瑶族刺绣

瑶族的挑花刺绣工艺精致细巧。瑶族妇女都是刺绣能手，绣花时既不用画图描底，也不用其它工具，只需一针一线和一双灵巧的手，随意发挥便可绣出各种不同的花纹图案，令人称奇。



ລວດລາຍທີ່ສືບສິນງົດງາມຕ່າງ ໆ ໂດຍມີຮູບດອກຈັນ,ຮູບຈະຕຸລັດ,ຮູບສາມແຈແລະຮູບຕົວໜັງສືສະຫຼັບສັບສອດກັນ.

ສີມືຂີດດອກປັກແສ່ວຂອງໄທເຜົ່າຢ້າວ ວິຈິດບັນຈົງ.ເນື້ອໃນລວດລາຍສຳລັບປັກແສ່ວຂອງເຂົາເຈົ້າສຳຄັນແມ່ນຕົ້ນໄມ້ໃບຫຍ້າ,ດອກດວງມາລາແລະສັດນາ ໆພັນ,ກໍ່ມີການສະແດງຮູບເລຂາຄະນິດແລະຮູບຕົວອັກສອນຕະຫຼອດຮອດພາບພົດຂອງຄົນ,ຫຼາຍແບບລີງລາຍ,ຈັ່ງແມ່ນຫຼາຍຮູບຫຼາຍຊົງ.ເວລາແມ່ຍິງເຜົ່າຢ້າວແສ່ວດອກ,ຂະເຈົ້າບໍ່ໄດ້ແຕ້ມຮູບໃສ່ແລະກໍ່ບໍ່ໃຊ້ເຄື່ອງມືອັນອື່ນ,ພຽງແຕ່ອາໄສສອງມືທີ່ຖະໜັດຄ່ອງເຄີຍແສ່ວແຕ່ລະເຂັມແຕ່ລະເສັ້ນໄໝກໍ່ປະກົດລວດລາຍຕ່າງ ໆອອກມາ.

ແມ່ຍິງເຜົ່າຢ້າວມັກແສ່ວລວດລາຍດອກຄາຍ ດອກຈອງແລະໝາກປີ...ໃສ່ທີ່ຄໍເສື້ອ,ແຂນເສື້ອ,ຊວງເອິກເສື້ອ,ຜ້າຮອງບ່າ,ຜ້າອ້ຽງແລະສາຍຮັດແອວ,ມັນບໍ່ພຽງແຕ່ເພີ່ມຄວາມງາມ ຫາກຍັງທົນທານອີກ.

ຜະລິດຕະພັນປັກແສ່ວຂອງແມ່ຍິງເຜົ່າຢ້າວນັ້ນ,ງາມກວ່າໝູ່ນັ້ນແມ່ນຜືນໂສ້ງກັບສາຍຮັດແອວ.ຂະເຈົ້າປັກແສ່ວລວດລາຍເປັນຄວບຄູ່ດ້ວຍເສັ້ນໄໝສີຕ່າງ ໆສັບສອດກັນ,ຜືນໂສ້ງກັບສາຍແອວປະກອບເປັນຮູບວິຈິດງາມຕາ.ໜຸ່ມສາວເຜົ່າຢ້າວລ້ວນແຕ່ຊ່າງອອກແບບປັກແສ່ວ,ເມື່ອຂະເຈົ້າແສ່ວຜືນໂສ້ງກັບສາຍຮັດແອວດ້ວຍສີມືຊຳນານສຳເລັດເສັດສິ້ນ ກໍ່ຖືເປັນກຽດທະນົງໃຈ.ໃນວາລະວັນບຸນເທສະການຫຼືຕົກຕະຫຼາດນັດ,ໜຸ່ມຊາຍເຜົ່າຢ້າວເລືອກຮູ້ເລືອກແຟນ ກ່ອນອື່ນມັກສັງເກດເບິ່ງຜືນໂສ້ງກັບສາຍຮັດແອວຂອງຊຸມໝູ່ຜູ້ສາວ,ສັງເກດຕີລາຄາເບິ່ງຝ່າຍກົງກັນຂ້າມມີທັກສະສີໄມ້ລາຍມືເຖິງຂັ້ນໃດ,ສະຫຼາດພຽນທຳປານໃດ.ເນື່ອງດ້ວຍເຫດນີ້ເອງ,ຊຸມໝູ່ໜຸ່ມ ໆສາວ ໆກ່ອນອື່ນຈຶ່ງວ່າສຸມສະຕິປັນຍາ ເທື່ອແຮງໃສ່ຜືນໂສ້ງກັບສາຍຮັດແອວນີ້ແຫຼະ.



文：志平

# ແຄນ--ເພື່ອນສະໜິດຂອງໄທເຜົ່າມົ້ງ

## 芦笙——苗族人的密友良伴

在中国大地上，只要有苗族人的地方，就有芦笙。芦笙是一种古老乐器，被苗族人民视为密友良伴。



ໝູ່ສາວເຜົ່າມົ້ງກຳລັງເສບທຳນອງແຄນມົ້ງ　一群苗族少女在演奏芦笙曲　新华社图

ຢູ່ໃນແຜ່ນດິນຈີນ,ບ່ອນໃດວ່າແຕ່ມີໄທເຜົ່າມົ້ງ,ບ່ອນນັ້ນກໍ່ຕ້ອງມີແຄນ.ແຄນເປັນເຄື່ອງເສບເກົ່າແກ່ຊະນິດໜຶ່ງ,ຖືກປະຊາຊົນເຜົ່າມົ້ງຖືເປັນເພື່ອນສະໜິດມິດສະຫາຍ.

ຊາຍເຜົ່າມົ້ງໃຜ ໆກໍ່ຊ່າງເປົ່າ,ຜູ້ຍິງໃຜ ໆກໍ່ຟ້ອນເປັນ.ເມື່ອພົບເວລາຫວາງວຽກຫຼືພິທີແຕ່ງດອງເຂົາເຈົ້າກໍ່ຕ້ອງເປົ່າແຄນແລະຟ້ອນເປົ່າແຄນ,ໂດຍສະເພາະເວລາວັນບຸນຕ່າງ ໆ,ຄູ່ແຄນນັບເປັນຮ້ອຍຊຸມກັນເປົ່າສຽງດັງກ້ອງອຶກກະທຶກໄປໄກເປັນໜ້າສະຫວ່າງຜ່າເຜີຍ.ຢູ່ບ້ານເຜົ່າມົ້ງ,ແຕ່ລະປີກໍ່ຕ້ອງຈັດງານເປົ່າແຄນຫຼາຍເທື່ອຢ່າງຄຶກຄື້ນລື່ນເລີງ.ຍາມວັນບຸນຊ່າງເປົ່າແຄນຂອງໝູ່ບ້ານຕ່າງ ໆພາກັນເຕົ້າໂຮມຢູ່ເປີ້ນພູເສບແຄນ ກາຍເປັນພາບສາຄອນແຫ່ງການຟ້ອນລຳທຳເພງເສບແຄນ.ຈັງຫວະສຽງອັບຕໍ່ກອນຂອງບ່າວ ໆສາວ ໆທີ່ສະແດງຄວາມຮັກໄຄ່ໃຝ່ຫາກັນຈັ່ງແມ່ນຟົດຟື້ນຊື່ນບານ,ພວກຜູ້ເຖົ້າເວົ້າລົມຫົວມ່ວນກັນ,ຊຸມແມ່ຍິງຍູທ່າງຟ້ອນຕາມຈັງຫວະສຽງແຄນ,ສິ່ງທີ່

ໜ້າດູດດື່ມສາຍຕາອາດຈະແມ່ນການແຂ່ງຂັນຂອງໝ່ອຍເປົ່າແຄນທີ່ຈັດສັນເປັນ 10 ປາຍໝ່ອຍ,ມີການເສບເປົ່າຂອງບຸກຄົນແລະກໍ່ມີການສະແດງລີລາເສບເປົ່າລວມໝູ່,ຊ່າງເປົ່າແຄນທັງເປົ່າທັງຟ້ອນໄປພ້ອມ,ຖ້າໝ່ອຍໃດຫາກເສບເປົ່າທຳນອງໃໝ່ ໆຢ່າງບໍ່ຢຸດຢ່ອນ ກໍ່ໝາຍວ່າໄດ້ຊະນະ,ແລ້ວເຕົ້າແຄນຂອງເຂົາເຈົ້າກໍ່ຖືກຄ້ອງແຖບຜ້າໄໝແດງເປັນຜູ້ຊະນະ,ໝູ່ບ້ານຫຼືບຸກຄົນທີ່ຊະນະນັ້ນກໍ່ຖືກຄົນທັງຫຼາຍນັບໜ້າຖືຕາ.ລະຫວ່າງມື້ວັນບຸນ,ຍັງຈັດການເຄື່ອນໄຫວຄວາຍຊົນຄວາຍແລະຊ່ວງມ້າຊຶ່ງໄດ້ເສີມບັນຍາກາດມ່ວນຊື່ນເບີກບານໃນປາງບຸນຕື່ມອີກ.

ການຟ້ອນເສບແຄນ,ເປັນສ່ວນປະກອບທີ່ສຳຄັນສຳລັບຊີວິດວັດທະນະທຳຂອງຊົນເຜົ່າສ່ວນໜ້ອຍໄທເຜົ່າມົ້ງ.ຢູ່ໃນທຸກໝູ່ບ້ານເຜົ່າມົ້ງກໍ່ມີສະຖານທີ່ໃຈກາງສຳລັບຟ້ອນເສບແຄນ,ໃນຍາມລາຕີເດືອນແຈ້ງ ສຽງແຄນດັງກ້ອງ,ຍິງຊາຍນ້ອຍໃຫຍ່ທົ່ວບ້ານທະຍອຍກັນເຕົ້າໂຮມຢູ່ສະຖານທີ່ດັ່ງກ່າວ ຟ້ອນລຳຕາມຈັງຫວະສຽງແຄນ,ຍູທ່າງສະເຫວີຍຄວາມຊົມຊື່ນຫຼັງຈາກອອກແຮງງານ.ທຳນອງແຄນຂອງເຂົາເຈົ້າມີຫຼາຍຢ່າງ,ເນື້ອໃນແລະຮູບການກໍ່ຫຼາຍແບບ,ແຕ່ສ່ວນຫຼາຍກໍ່ໄດ້ມາຈາກການຂັບລຳພື້ນບ້ານພື້ນເມືອງ,ການເສບເປົ່າແຄນສ່ວນມາກປະສານສົມທົບກັບວາດຟ້ອນ, 《ຟ້ອນເປົ່າແຄນ》 ຂອງເຜົ່າມົ້ງໄດ້ນິຍົມກັນໃນໝູ່ມະຫາຊົນ,ປະຈຸບັນນິຍົມກັນທົ່ວໄປແຍກເປັນຟ້ອນຈັງຫວະໄວແລະຈັງຫວະຊ້າ,ໃນກໍລະນີຍາມບຸນແລະງານແຂ່ງຂັນມັກຈະຟ້ອນຈັງຫວະໄວ,ວາດຟ້ອນຄຶກຄັກໄວວ່ອງສົດຊື່ນ;ຢູ່ໃນເດີ່ນບ້ານພັດຟ້ອນຈັງຫວະຊ້າ ສະແດງລີລາວາດແອ່ນອ່ອນຟ້ອນລຳຢ່າງສະໜຸກສຳລານໃຈ.

ເຕົ້າແຄນມີຖານະບົດບາດອັນແນ່ນອນໃນຊີວິດຄວາມຮັກຂອງຊຸມໝູ່ບ່າວສາວເຜົ່າມົ້ງ,ເມື່ອໃດອ້າຍບ່າວເຜົ່າມົ້ງຈະນັດພົບກັບຜູ້ສາວ,ເຕົ້າແຄນນີ້ແຫຼະເປັນ "ສື່ສຳພັນ",ເມື່ອລົມບ່າວລົມສາວສະແດງຄວາມຮັກຕໍ່ກັນ,ສຽງແຄນກໍ່ເປັນ "ສຳນຽງສຽງເວົ້າ" ທີ່ນິ່ມນວນມ່ວນຫູ.ຕາມທຳມະດາໜຸ່ມສາວກັບຈາກໄປເຮັດວຽກ,ຫຍິບປັກຖັກແສ່ວຢູ່ໃຕ້ໂຄມໄຟທີ່ປິດປ່ອງຢ້ຽມ,ພໍໄດ້ຍິນສຽງແຄນລົ້ງຫູກໍ່ຮີບປຸບປັບຍືນຂຶ້ນມຸ່ງໜ້າໄປສູ່ບ່ອນສຽງແຄນແວວວອນກ້ອງມາ...



ໝູ່ສາວເຜົ່າມົ້ງສະແດງການຟ້ອນເປົ່າແຄນ　　苗族少女表演芦笙舞　新华社图

文：陆　蕊　绘图：江 洋

wǒ men yì qǐ qìng zhù shēng rì ba
我 们 一 起 庆 祝 生 日 吧

# ພວກເຮົາພາກັນສະຫຼອງວັນເກີດເນາະ

cí yǔ
## 一、词 语： ຄຳສັບ:

qìng zhù
庆 祝 ສະເຫຼີມສະຫຼອງ(ສະຫຼອງ)
xīng qī jǐ
星 期 几 ວັນຫຍັງ
qǐ chuáng
起 床 ລຸກນອນ
tiān qì
天 气 ອາກາດ
dì dì
弟 弟 ນ້ອງຊາຍ
shēng rì
生 日 ວັນເກີດ
pá shān
爬 山 ຂຶ້ນພູ
zhǔn bèi
准 备 ກະກຽມ
shuì jiào
睡 觉 ນອນ

jù zi
## 二、句 子：ປະໂຫຍກ:

wǒ men yīng gāi qìng zhù yí xià
1、我 们 应 该 庆 祝 一 下！
ພວກເຮົາຄວນສະເຫຼີມສະຫຼອງກັນໜາ!

wǒ qù jiào tā qǐ chuáng
2、我 去 叫 他 起 床 。 ເຮົາໄປປຸກເຂົາລຸກນອນ.

jīn tiān xīng qī wǔ shì mā mā de shēng rì
3、今 天 星 期 五，是 妈 妈 的 生 日。
ມື້ນີ້ແມ່ນວັນສຸກ,ແມ່ນວັນເກີດຂອງແມ່.

wǒ zhǔn bèi hǎo le mǎ shàng chū fā ba
4、我 准 备 好 了，马 上 出 发 吧！
ເຮົາໄດ້ກະກຽມໃຫ້ຮຽບຮ້ອຍແລ້ວ,ກະອອກເດີນທາງໂລດສາ!

jīn tiān tiān qì hěn hǎo wǒ men qù yóuyǒng ba
5、今 天 天 气 很 好，我 们 去 游 泳 吧。
ມື້ນີ້ອາກາດດີຫຼາຍ,ພວກເຮົາໄປລອຍນ້ຳນຳກັນເທາະ.






## qíng jǐng huì huà
## 三、情景会话：
## ການສົນທະນາກັນໃນກໍລະນີແວດລ້ອມ:

xiǎohuá ān nī jīn tiān shì wǒ dì dì de
晓华：安妮，今天是我弟弟的

shēng rì wǒ men yìqǐ qìng zhùba
生日，我们一起庆祝吧。

ອານນີ,ມື້ນີ້ແມ່ນວັນເກີດຂອງນ້ອງຊາຍເຮົາ, ພວກເຮົາພາກັນສະຫຼອງເນາະ.

ān nī nǐ yǒu shén me dǎ suan ma
安妮：你有什么打算吗？

ເຈົ້າມີຄວາມຄິດຢາກຫຍັງແດ່?

xiǎo huá tiān qì zhè me hǎo wǒ men yì
晓华：天气这么好，我们一

qǐ qù pá shān ba
起去爬山吧！

ມື້ນີ້ອາກາດດີຄືຈັ່ງຊີ້, ພວກເຮົາພາກັນໄປຂຶ້ນພູເທາະ!

ān nī zhè ge zhǔ yì bú cuò
安妮：这个主意不错。

ຄວາມຄິດນີ້ດີຫຼາຍ.

xiǎohuá wǒ dì dì zàishuìjiàowǒ qù jiào
晓华：我弟弟在睡觉，我去叫

tā qǐ chuáng
他起床。

ນ້ອງຊາຍເຮົາຍັງນອນຢູ່,ເຮົາໄປປຸກເຂົາລຸກ (ນອນ).

ān nī hǎo de wǒ men shén me shí
安妮：好的，我们什么时

hòu chū fā
候出发？

ດີຫຼາຍ,ພວກເຮົາຈະອອກເດີນທາງເວລາໃດຫວາ?

xiǎohuá diǎn ba wǒ zài nǐ jiā mén kǒu
晓华：9点吧，我在你家门口

děng nǐ men
等你们。

9 ໂມງເນາະ,ເຮົາຊິຄອຍຖ້າພວກເຈົ້າຢູ່ປາກປະຕູເຮືອນເຈົ້າ.

ān nī hǎo de yì huì er jiàn
安妮：好的，一会儿见。

ເອົາລະເນາະ,ບຶດໜຶ່ງຈຶ່ງມາພົບກັນອີກ.

## tiánkòng
## 四、填空： ຂຽນແຖມໃສ່ບ່ອນຫວ່າງ:

shuì jiào
睡觉 ນອນ

dì dì
弟弟 ນ້ອງຊາຍ

qìng zhù
庆祝 ສະຫຼອງ(ສະຫຼອງ)

xīng qī jǐ
星期几 ວັນຫຍັງ

jīn tiān tiān qì zhè me hǎo
1、今天 ？天气这么好。
ມື້ນີ້________? ອາກາດດີປານນີ້.

tā shì wǒ
2、他是我 。
ເຂົາແມ່ນ__________ຂອງເຮົາ.

zāo gāo tā hái zài ne
3、糟糕，他还在 呢！
ຕາຍ!ຕາຍ!ເຂົາຍັງ__________ຢູ່ເດ!

wǒ men yīng gāi yí xià
4、我们应该 一下。
ພວກເຮົາຄວນ__________ກັນໜາ!







shàng qī xuǎn cí tián kòng dá àn
上期选词填空答案：
ຄຳຕອບສະບັບກ່ອນ:

1、注意；选　2、打算　3、意思；但是　4、兴趣




# ສົ່ງເຊົ້າຫຼືຕົງທົ້ງເຊົ້າ(Cordyceps sinensis):ສະໝຸນໄພມີຄ່າ

## 珍贵药材：冬虫夏草

冬虫夏草是中国医药宝库中的一味珍贵的中药药材，人们把它与人参、鹿茸列为三大补品。

ສົ່ງເຊົ້າເປັນຢາສະໝຸນໄພຈີນທີ່ມີຄ່າຊະນິດໜຶ່ງໃນຄັງຢຸກຢາຈີນ,ຊຸມຊົນທັງຫຼາຍເອົາມັນປຽບປານໂສມຄົນແລະເຂົາກວາງອ່ອນອັນເປັນຢາບຳລຸງຮ່າງກາຍສຸຂະພາບ.

ສົ່ງເຊົ້າຖືກຖືວ່າເປັນຂອງປະເສີດໃນພູພຽງຊິງໄຮ--ຕີເບດ,ຊ່າລືໃນໂລກກັນວ່າ"ຫຍ້າຄຳ""ພະຍາໃນຢຸກຢາ"ວ່າຈັ້ນ.ມັນເກີດຕາມເຂດປອດມົນລະພາວະທີ່ມີຄວາມສູງຈາກລະດັບນ້ຳທະເລ 3000-5000 ແມັດບົນພູພຽງຊິງໄຮ--ຕີເບດ,ມັນເປັນດ້ວງຄອບທັງເປັນດ້ວງທັງເປັນພືດຫຍ້າ,ບັນຈຸ ຈຸລະທາດມູນຫຼາຍຊະນິດຄືະກົດສົ່ງເຊົ້າ,ໂປຣເຕອີນ,ອາມີໂນອາຊິດແລະSr,ກາລີ(K),ໂຊດຽມເປັນຕົ້ນ.

ສົ່ງເຊົ້າສຳຄັນໃຊ້ບຳລຸງໝາກໄຂ່ຫຼັງແລະປອດ,ເລື່ອນຄວາມຊະລາ,ຍັງມີຄຸນປະໂຫຍດຕ້ານມະເຮັງ,ກັນພະຍາດເລືອດຈາງອ່ອນເພຍແລະພະຍາດອັກເສບຕັບB,ຍົກສູງພູມຄຸ້ມກັນໃນຮ່າງກາຍຂອງຄົນ.ເນື່ອງຈາກວ່າສົ່ງເຊົ້າເປັນຂອງທີ່ມີໜ້ອຍທີ່ສຸດແລະມີຄ່າແພງອີກ,ໃຊ້ປຸງເປັນຢາຂະໜານໂດຍກົງບໍ່ຫຼາຍ,ສ່ວນຫຼາຍໃຊ້ປຸງອາຫານຕຸ໋ນກັບເປັດໄກ່ແລະປະເພດຊີ້ນແລ້ວຮັບປະທານ,ເຮັດເປັນໂພຊະນາຫານບຳບັດ,ເປັນການຊ່ວຍປິ່ນປົວແກ້ພະຍາດ.















《占芭》杂志老挝发行、销售代理处：向导书屋　电话：00856-21-213191

ຕົວແທນຈຳໜ່າຍວາລະສານ 《ຈຳປາ》 ໃນເມືອງລາວ:ແສງດາວຂາຍປຶ້ມ Tel:00856-21-213191


Welcome to Laos... Land of Timeless Beauty
ການບິນລາວ
Lao Airlines
The Beauty of Lao Hospitality